Dara Reads Lao Book 3 (Laotian Language)
Luangpraseut Khamchong
*LAO.3670.00*
WINTER 2003

Khamchong Luangpraseut

# ດາຣາ ອ່ານ ພາສາລາວ



LAO. [redacted]

# DARA READS LAO

# 3

MULTIFUNCTIONAL SUPPORT SERVICE CENTER
San Diego State University 1985

LAO [redacted]
WINTER 2003

Dara Reads Lao vol 3
Luangpraseut, text MSSC San
LAO [redacted]

SDSU

AN OFFICIAL PUBLICATION
MULTIFUNCTIONAL SUPPORT SERVICE CENTER
SAN DIEGO STATE UNIVERSITY
6363 ALVARADO COURT, SUITE 200
SAN DIEGO, CA. 92120

(619) 265-5193 265-6606

Funds for the publication were made available fro
Refugee Children, U.S. Office of Education through
of Education - Office of Bilingual Bicultural Edu
expressed herein do not necessarily reflect the pos
Office of Education or the California State Departm... . -
endorsement of these agencies should be inferred.

# ຄຳນຳ

South East Asia Community Resource Center
Rancho Cordova USD
Rancho Cordova CA 95670

ປື້ມ " ດາຣາອ່ານພາສາລາວ " ທີ່ທ່ານກຳລັງໃຫ້ກຽດສົນໃຈພາດແສງຕາທົດສອບຕີລົມໃນຂນະນີ້ ເປັນພຽງ [illegible] ຜົນຂັ້ນປະຖົມ ໃນເຈຕນາຣົມ ຂອງຂ້າພະເຈົ້າ ແລະ ຂອງ ສຖາບັນລາວໃໝ່ອິສຣະ ທີ່ໝາຍປອງສົ່ງເສີມການປັບປຸງຖານະ ຂອງພາສາລາວແລະ ການຟື້ນຟູຮີດຄອງປະເພນີ ອັນປະເສີດ ຂອງເຊື້ອຊາດເຜົ່າພັນລາວເຮົາໃນສະຫະຣັດອະເມຣິກາ.

ນອກຈາກ ຄວາມມຸ່ງມາດປາຖນາ ຢາກເຫັນຊາວໜຸ່ມລາວທຸກທົ່ວເຜົ່າ ແລະ ໜຸ່ມລາວອະເມຣິກັນ ທຸກຖ້ວນໜ້າ ທີ່ເກີດໃໝ່ໃຫຍ່ລຸນທັງຫລາຍ ເປັນຄົນຮຽນເກັ່ງ, ສຳເຣັດວິຊາຄວາມຮູ້ສູງ ແລ້ວກໍສາມາດດຳເນີນການໃຊ້ພາສາລາວ ໂດຍການອ່ານລ່ຽນຂຽນໄຫລແລ້ວນັ້ນ, ຈຸດປະສົງລະຍະໄກ ທີ່ສຳຄັນບໍ່ໜ້ອຍ ຂອງ ສຖາບັນ ກໍແມ່ນ ຄວາມຕັ້ງໃຈໃນການສແວງຫາ ປຸກລຸກສະຕິຕື່ນຕົວ ແລະ ໜ້າທີ່ຮັບຜິດຊອບພິເສດ ຂອງບັນດານັກຂີດຂຽນ ແລະ ນັກປັນຍາຊົນລາວ ທຸກທົ່ວແຫ່ງ ເພື່ອກົ່ມໂຮມສະຕິປັນຍາ ສ້າງເງື່ອນໄຂອຳນວຍໃຫ້ພາສາລາວ, ທັງດ້ານພາສາເວົ້າ ແລະ ພາສາຂຽນ, ສາມາດຮັບໃຊ້ຜົນປໂຍດອັນກວ້າງໄກ ; ແລະອີກຢ່າງນຶ່ງ ກໍແມ່ນເພື່ອໃຫ້ ພາສາລາວ ສາມາດເຄື່ອນທີ່ອອກຈາກໂຄຈອນຕລາດຊຸບຊີບສັງຄົມ ດັ່ງໃນສະພາບ ອັນຕ່ຳຕ້ອຍ ດ້ອຍອະນາຄົດ ຂອງສມັຍປັດຈຸບັນ.

ດາຣາອ່ານພາສາລາວ ເປັນຊຸດປື້ມອ່ານ ສຳລັບໝົດທຸກຄົນ, ບໍ່ວ່າເດັກນ້ອຍຫລືຜູ້ໃຫຍ່, ໂດຍບໍ່ໄດ້ຈຳກັດປີການສຶກສາ ຂອງຜູ້ສົນໃຈນຳພາສາລາວ. ຊຸດປື້ມຊຸດນີ້ ມີດ້ວຍກັນ ສີ່ເຫລັ້ມ. ແຕ່ລະເຫລັ້ມ ມີຮ່າງເປົ້າໝາຍການຮຽນອ່ານພາສາລາວແບບໃໝ່. ຮູບ

ແຕ້ມ ຕ່າງໆ ເຫລົ່ານັ້ນ ລ້ວນແລ້ວ ແຕ່ເປັນ ເງົາພາບ ຕົວຈິງ ເຊິ່ງໄດ້ ທອດ ມາຈາກ ກິ່ນການ ບ້ານຊ່ອງ ຂອງລາວເຮົາ ຫລື ຂອງ ສະພາບໃຫມ່ ໃນ ດິນແດນ ແຫ່ງນີ້. ດັ່ງນັ້ນ ເອງ ຮູບພາບ ດັ່ງກ່າວ ຈຶ່ງ ບໍ່ແມ່ນ ເປັນ ພຽງ ຮອຍ ຄອງນ້ຳ ເມິກ ເອ້ກະດາດ ຊື່ໆ ແຕ່ ຫາກ ແມ່ນ ສ່ວນ ປະກອບ ການສິດສອນ ພິເສດ ເພື່ອໃຊ້ ສຳລັບ ເຊີດຊູ ແລະ ຄ້ຳ ເຈຕນາ ຂອງ ບັນດາ ອາຈານ ທັງຫລາຍ ທີ່ ຕັ້ງໃຈ ຢາກ ສອນ ພາສາລາວ ໃນ ພາຍໜ້າ ແລະ ເພື່ອ ເປັນການ ຊຸດຊ່ອຍ ບັນດາ ຄອບຄົວ ລາວ ອະເມຣິກັນ ທີ່ ເກີດມີ ຄວາມ ຕ້ອງການ ຝຶກຝົນ ສະຕິ ເຊື້ອຊາດ ຫລື ສະຕິ ວັທນະທັມ ຂອງ ພວກ ລູກ ຫລານ ທັງ ຫລາຍ ເຊິ່ງໄດ້ມາໃຫຍ່ ຫລື ເກີດຢູ່ໄກຈາກ ເຂດນ້ຳ ແດນດິນ ອັນແສນ ສງ່າງາມ ແຫ່ງ ເມືອງ ລາວເຮົາ ພຸ້ນ.

<u>ດາຣາອ່ານພາສາລາວ ເຫລັ້ມ ໑</u> ເປັນ ເຫລັ້ມ ແນະນຳ ສຳນຽງ ຂອງ ພະຍັນຊນະ ໒໗ ຕົວ ແລະ ສຣະ ໑໔ ຄູ່ ໂດຍໄດ້ໃຊ້ ຕົວອັກສອນ ພາສາໂຣມັນ ເຄັຽງ ຊ່ອຍຄວາມ ຈື່ຈຳໄປພ້ອມ. ບົດຮຽນ ແຕ່ລະບົດ ເປັນ ບົດ ສົມທົບ ຄຳສັບ ທີ່ມີຄວາມໝາຍ, ຫລັກ ໄວຍາກອນ ທີ່ ເຂົ້າໃຈງ່າຍ, ສຳນວນ ຂອງ ພາສາ ແລະ ວັທນະທັມລາວ. ວິທີການສອນ ພະຍັນຊນະ ແລະ ສຣະ ແບບໃໝ່ນີ້ ເປັນການ ເຮັດໃຫ້ ຜູ້ ຮຽນອ່ານ ພາສາລາວ ເທື່ອທຳອິດ ຮູ້ສຶກວ່າ ຕົນໄດ້ ຄວາມຮູ້ ກ່ຽວກັບ ວັທນະທັມ ຂອງ ຄົນລາວໄປພ້ອມ ແລ້ວກໍ ສາມາດ ຊົມຜົນ ແຫ່ງ ຄວາມ ພະຍາຍາມ ຂອງ ຕົນ ຢ່າງກະທັນຫັນ.

<u>ດາຣາອ່ານພາສາລາວ ເຫລັ້ມ ໒</u> ໄດ້ ປັ້ງຈຸດ ສຳຄັນໃສ່ ສຣະປະສົມ ແລະ ສອນ ໃຫ້ ຜູ້ທີ່ ອ່ານ ຜ່ານ ພະຍັນຊນະ ໒໗ ຕົວ ມາ ແລ້ວ ນັ້ນ ຈື່ຈຳ ລຳດັບ ຕົວອັກສອນ ລາວໂດຍ ວິທີ ຊັກຊວນ ຜູ້ຮຽນ ໃຫ້ ສົນໃຈ ຕໍ່ ຄຳສັບໃໝ່, ຕໍ່ ສຳນຽງໃໝ່, ຕໍ່ຈິດໃຈ ຂອງ ພາສາ

ລາວ ແລະ ຕໍ່ແນວຄຶດອັນເລິກແລບຂອງວັທນະທັມລາວ. ອາຈານຜູ້ຈະສິດສອນພາກນີ້ໃນພາຍໜ້າ ຄວນໃຊ້ຄວາມລະມັດລະວັງໃນການເລືອກຄຳສັບຕ່າງໆ ເພາະວ່າ ມີທັງຄຳສັບຕື້ນ ແລະ ຟັງງ່າຍ ຫລື ເຂົ້າໃຈງ່າຍ ແລະ ຄຳສັບເລິກພໍ່ສົມຄວນ ຢູ່ປົນກັນຢ່າງເນືອງນິດ, ແຕ່ດ້ວຍເຈຕນາຢ່າງແຈ່ມແຈ້ງ. ເຖິງຢ່າງໃດກໍດີ ຂ້າພະເຈົ້າ ເຊື່ອແນ່ວ່າ ບັນດາອາຈານທີ່ມີປະສົບປະການມາແລ້ວ ຄົງຈະໃສ່ໃຈຢ່າງພິເສດ ໃນການເລືອກຄຳສັບຕົວຢ່າງໃຫ້ເໝາະສົມກັບກາລະເທສະ ແລະ ໃຫ້ກ້ຳເກິ່ງກັບລະດັບສະຕິ ແລະ ອາຍຸກະສຽນ ພ້ອມທັງໃຫ້ສິ່ງແສງຕອບສນອງຕໍ່ຄວາມສົນໃຈຂອງຜູ້ທີ່ຈະມາອາສັຍຂໍເພິ່ງຮຽນນຳຝູງຕົນ.

<u>ດາຣາອ່ານພາສາລາວ ເຫລັ້ມ ໓</u> ເຊິ່ງເປັນເຫລັ້ມທີ່ທ່ານພວມພິສູດຢູ່ໃນປັດຈຸບັນນີ້ ມີບົດອ່ານປະກອບສ່ວນ ໑໙ ບົດ. ທຸກໆບົດອ່ານມີຄຳຖາມຂ້ອນບົດໄປພ້ອມ. ຄຳຖາມຫລາຍຂໍ້ຈະບໍ່ໄດ້ເຈາະຈົງໃສ່ສະເພາະແຕ່ເນື້ອເຣື່ອງຂອງບົດອ່ານ ເນື່ອງຈາກວ່າ ຄຳຖາມເຫລົ່ານັ້ນ ມີພາຣະຊັກຊວນອອກຄວາມນຶກຄຶດສ່ວນຕົວ, ຊວນສົນທະນາຫາລື ພ້ອມທັງຊວນຕັ້ງສະຕິເຈັ່ງຣະໄນກ່ຽວກັບງ່າແງ່ຂອງບັນຫາສັງຄົມ ແລະ ສິ່ງແວດລ້ອມໃໝ່. ກ່ອນອື່ນໝົດ, ຂ້າພະເຈົ້າຂໍອຸທິດບົດອ່ານທັງ ໑໙ ບົດໃນເຫລັ້ມນີ້ ເພື່ອຄວາມໝັ້ນຄົງຄະນັງແກ່ນຂອງຄອບຄົວລາວຕໍ່ໄປພາຍໜ້າ ແລະ ເພື່ອມິຕພາບອັນກວ້າງໄກ ລະຫວ່າງບັນດາຊົນຊາດຊົນເຜົ່າຈາກພື້ນແຜ່ນດິນລາວ ແລະ ນາໆເຊື້ອຊາດອື່ນໆທີ່ໄດ້ຮ່ວມອາສັຍການທຳມາຫາກິນເທິງພື້ນແຜ່ນດິນອັນອິສຣະສງ່າງາມແຫ່ງສະຫະຣັດອະເມຣິກາ.

<u>ດາຣາອ່ານພາສາລາວ ເຫລັ້ມ ໔</u> ເຊິ່ງເປັນເຫລັ້ມມ້ອນທ້າຍຂອງປຶ້ມອ່ານ

ຊຸດນີ້ ນັ້ນ ຄົງຈະໄດ້ ອອກສູ່ ສາຍຕາ ຂອງ ບັນດາ ທ່ານ ທັງຫລາຍ ໃນສົກປີ ສຶກສາ ໑໙໗໔-໗໕ ນີ້. ຈຸດເປົ້າ ໝາຍສ່ວນໃຫຍ່ໃນ ເຫລັ້ມ ໔ ກໍຄື ການ ສ້າງ ເງື່ອນໄຂ ອຳນວຍ ບາງປະການ ໃຫ້ນັກ ຄົ້ນຄວ້າ ແລະ ນັກສຶກສາ ລາວ ອະເມຣິກັນ ທີ່ ສແວງໃຊ້ ສັບ ເຕັກນິກ ເປັນ ພາສາລາວໃນລະດັບ ວິຊາການດ້ານ ສັງຄົມສາດ, ເສຖສາດ, ປວັດສາດ, ການເມືອງ ແລະ ອື່ນໆ...

ຂ້າພະເຈົ້າ ເຊື່ອແນ່ວ່າ ປຶ້ມ ດາຣາອ່ານພາສາລາວ ເຫລັ້ມ ທີ ໑ ແລະ ທີ ໒ ຍັງມີບັນຫາ ຂາດຕົກ ບົກ ຜ່ອງ ຫລາຍ ປະການ, ຈະ ແມ່ນ ດ້ານ ສະກົດ ຄຳ ສັບ ກໍດີ, ດ້ວຍການອ່ານຄືນບໍ່ ຮອບຄອບ ລະອຽດກໍດີ ຫລື ຈະ ແມ່ນ ດ້ວຍ ການຈັດ ພິມ ບໍ່ມາດຖານ ກໍດີ; ເພາະສະນັ້ນເອງ ຂ້າພະເຈົ້າ ຈຶ່ງ ຂໍ ຖືໂອກາດນີ້ ຊັກຊວນ ອ້ອນເຊີນ ບັນດາ ນັກອັກສອນສາດ ລາວ ແລະ ບັນດານັກ ຮຽນ ຂັ້ນ ອາວຸໂສ ທັງຫລາຍ ຈົ່ງ ຢ່າໄດ້ ລົດລະ ຜ່ອນ ຜັນ ການ ຕິຊົມ ຕໍ່ໄປ ພາຍໜ້າ. ຂ້າພະເຈົ້າ ຕັ້ງ ຫລັກ ຢູ່ໃນ ທ່າທີ ກຽມ ພ້ອມ ສເມີ ເພື່ອ ຊັ່ງ ຊາ ເຫດ ຜົນ ປະກອບ ເພື່ອ ຄວາມ ກ້າວໜ້າ ສຸກ ຂຸມ ຂອງ ພາສາ ລາວ ຢ່າງ ເລິກ ເຊິ່ງ ຕລອດໄປ.

ພ້ອມນີ້ ຂ້າພະເຈົ້າ ຂໍ ສະແດງ ຄວາມມີບຸນຄຸນ ອັນສູງສົ່ງ ຕໍ່ເຈົ້າໜ້າທີ່ ຂອງກະຊວງ ສຶກສາທິການ ແຫ່ງ ຮັດຄາລີຟໍເນັຽ, ດຣ. ເລໂອ ໂລແປສ (DR. LEO LOPEZ), ດຣ. ເລ ວັນ (DR. LE VAN) ພ້ອມດ້ວຍ ດຣ. ວິລຽມ ອາດໍຣໂນ (DR. WILLIAM ADORNO) ແລະ ທ່ານ ຈັນ ກັນ ຊວນ (MR. TRAN CANH XUAN) ຈາກ ມະຫາວິທຍາລັຍ ຮັດຄາລີຟໍເນັຽ ທີ່ ເມືອງ ແຊນດີເອໂກ ເຊິ່ງໄດ້ ສົ່ງເສີມ ແລະ ສແດງ ຄວາມ ເປັນຫ່ວງ ຕໍ່ ການ ຂຍາຍຕົວ ຂອງ ພາສາ ລາວ ແລະ ວັທນະທັມ ລາວ ໃນ ຣັດ ຄາລີຟໍເນັຽ ຢູ່ຕລອດມາ. ອີກປະການນຶ່ງ ຂ້າພະເຈົ້າ ຂໍ ຄຸນງາມຄວາມດີ ທີ່ ອາດຈະ ເກີດ ຂຶ້ນ ຍ້ອນ ປຶ້ມອ່ານ ຊຸດນີ້ ນັ້ນ ຈົ່ງ ກັບ ກາຍ ເປັນ ການ

ກຸມມະນາ ບຸນຄຸນ ອັນລົ້ນຄ່າ ຕໍ່ ບັນດາ ພໍ່ແມ່ ພີ່ນ້ອງ ປະຊາຄົມລາວ ທີ່ ເມືອງໂມແດສໂຕ, ຣັດ ຄາລີຟໍເນັຽ, ໂດຍ ສະເພາະຢ່າງຍິ່ງ ຕໍ່ ທ່ານ ອາຈານ ອ່ອນສີ ອິນທະວົງ ພ້ອມດ້ວຍ ຄອບຄົວ ຕລອດ ເຖິງ ເພື່ອນ ຮ່ວມງານ ຂອງເພິ່ນ ທຸກຖ້ວນໜ້າ, ບໍ່ວ່າ ພາຍໃນ ສະມາຄົມ ລາວລ້ານຊ້າງ ຫລື ຢູ່ ພາຍນອກ ກໍດັ່ງດຽວກັນ. ຂວັນໃຈ ແຫ່ງຄວາມ ເປັນລາວ ຂອງ ທ່ານ ອາຈານ ອ່ອນສີ ໄດ້ໃຫ້ກຳ ລັງໃຈ ແກ່ ຂ້າພະເຈົ້າ ໃນລະດັບ ເລິກແລບທີ່ສຸດ.

ທ່ານອາຈານ ປຣານີ ຈະນະນິກອນ ແລະ ທ່ານ ໂປລ ເຢືອວາງ ( MR. PAUL GEU VANG) ເປັນ ບຸກຄົນ ທັງສອງ ທີ່ໄດ້ ເອົາໃຈໃສ່ ຕິດຕາມ ແລະ ຊຸກຍູ້ ການ ຄົ້ນຄວ້າ ບັນຫາ ລາວ ທີ່ ຂ້າພະ ເຈົ້າ ສົນໃຈ ມາໄດ້ ຫລາຍປີແລ້ວ. ທ່ານ ທັງສອງນີ້ໄດ້ ພາໃຫ້ ຂ້າພະເຈົ້າ ມີຄວາມ ຫວັງ ທະວີຂຶ້ນ ວ່າ ຄວາມເປັນລາວ ທີ່ ຂາວສອາດ ແລະ ສງ່າ ຜ່າເຜີຍ ນັ້ນ ອາດຈະ ປົ່ງ ຮາກ ເຫງົ້າ ແລະ ອອກດອກ ບານ ແຜ່ໄປ ທົ່ວ ທຸກ ແຫ່ງໄດ້ ໃນ ວັນນຶ່ງ ຂ້າງໜ້າໄປພຸ້ນ.

ກ່ອນອື່ນໝົດ, ຂ້າພະເຈົ້າ ຂໍ ຂອບໃຈ ນຳ ພັນຣະຍາ ຂອງ ຂ້າພະເຈົ້າ ເອງ, ຣາລິນກາ ຫລວງປຣະເສີດ ທີ່ໄດ້ ສະແດງ ຄວາມ ເຄົາຣົບ ນັບຖື ສິລປະວັທນະທັມລາວ ມາບໍ່ຂາດ ແລະ ບໍ່ ຍອມ ໃຫ້ ລູກ ທັງສອງ, ດາຣາ ແລະ ສັນຕິ, ລົດລະສະຕິ ຮູ້ສຶກວ່າ ຕົນ ເປັນ ລູກຮັກ ຫລານແພງ ຂອງ ດິນລາວ ເປັນ ອັນຂາດ.

ໂດຍ ຄວາມ ຮັກແພງ ແລະ ຫວັງດີ ຢູ່ຕລອດ,

SANTA ANA, CALIFORNIA
FEBRUARY 1986

ຄຳຈິງ ຫລວງປຣະເສີດ

Khamchong Luangpraseut

# ດາຣາ ອ່ານ ພາສາລາວ

# Dara Reads Lao



ປຶ້ມ ເຫລັ້ມທີ ໓

BOOK 3

Illustrations by Halinka Luangpraseut

| CONTENTS | ສາຣະບານ | ໜ້າ Page |
|---|---|---|
| ບົດຮຽນ ທີ ໑ | ພໍ່ແມ່ຮັກ | ໕ - ໑໐ |
| ບົດຮຽນ ທີ ໒ | ປູ່ຍ່າ ແລະ ພໍ່ເຖົ້າແມ່ເຖົ້າ | ໑໑ - ໑໖ |
| ບົດຮຽນ ທີ ໓ | ຄອບຄົວ ຂອງ ເອື້ອຍອ້ອຍ | ໑໗ - ໒໖ |
| ບົດຮຽນ ທີ ໔ | ລູກສາວ ແລະ ລູກຊາຍ | ໒໗ - ໓໔ |
| ບົດຮຽນ ທີ ໕ | ການດຳຣົງຊີວິດໃໝ່ | ໓໕ - ໔໐ |
| ບົດຮຽນ ທີ ໖ | ປໂຍດ ຂອງ ເວລາ | ໔໑ - ໔໖ |
| ບົດຮຽນ ທີ ໗ | ຮຽນເພື່ອຮູ້ | ໔໗ - ໕໖ |
| ບົດຮຽນ ທີ ໘ | ປະເທດອິນດູຈີນທັງ ໕ | ໕໗ - ໖໒ |
| ບົດຮຽນ ທີ ໙ | ເຂດແຂວງດິນລາວ | ໖໓ - ໖໘ |

## ສາຣະບານ (ຕໍ່)


| | | ໜ້າ |
|---|---|---|
| ບົດ ຮຽນ ທີ ໑໐ | ໝູ່ນັກຮຽນດຽວກັນຂອງຂ້ອຍ | ໖໙-໗໘ |
| ບົດ ຮຽນ ທີ ໑໑ | ນາງຮວາ ແລະ ທ້າວດ່ວນ | ໗໙-໘໘ |
| ບົດ ຮຽນ ທີ ໑໒ | ຂ້ອຍຕ້ອງເກ່ງພາສາອັງກິດ | ໘໙-໙໖ |
| ບົດ ຮຽນ ທີ ໑໓ | ເພື່ອນຂເມນຂອງຂ້ອຍຄົນນຶ່ງ | ໙໗-໑໐໔ |
| ບົດ ຮຽນ ທີ ໑໔ | ລີເຊັ້ງສົນໃຈພາສາສະເປນ | ໑໐໕-໑໑໒ |
| ບົດ ຮຽນ ທີ ໑໕ | ເອື້ອຍ ມາຣີຢາ ລູເຊໂອ | ໑໑໓-໑໒໐ |
| ບົດ ຮຽນ ທີ ໑໖ | ອົພຍົບອິນດູຈີນໃນສະຫະຣັດ | ໑໒໑-໑໒໘ |
| ບົດ ຮຽນ ທີ ໑໗ | ສັນຊາດໃໝ່ຂອງຂ້ອຍ | ໑໒໙-໑໓໖ |
| ບົດ ຮຽນ ທີ ໑໘ | ສ້າງຄວາມດີ ຢ່າໜີຄວາມຍາກ | ໑໓໗-໑໔໐ |
| ບົດ ຮຽນ ທີ ໑໙ | ຝັນວ່າ . . . | ໑໔໑-໑໔໓ |

ບົດຮຽນ ທີ ໑

# ພໍ່ແມ່ຮັກ

Lesson 1

## MY LOVING PARENTS

# ພໍ່ແມ່ຮັກ

ພໍ່ ແມ່ ຂ້ອຍ	ຮັກ ຂ້ອຍ ອີ ຫລີ
ຄຸນ ຄວາມ ດີ	ເພິ່ນ ສອນ ເພິ່ນ ສັ່ງ
ສອນ ຂ້ອຍ ນັ່ງ	ຫລັງ ຊື່ ບ່າ ພຽງ
ສອນ ປີງ ສຽງ	ເຊີດ ຊູ ຄວາມ ເວົ້າ
ສອນ ຂ້ອຍ ເລົ່າ	ຈື່ ຊື່ ລຸ່ງ ຕາ

ສອນ ວາຈາ ລົມ ນຳ ຜູ້ໃຫຍ່
ສອນ ຮັກໄຄ່ ຊຸ່ມ ຄູ່ ຄົນ ດີ
ສອນ ວິ ທີ ຫລີກ ລຽງ ຄົນ ຮ້າຍ
ສອນ ນ້ອງ ອ້າຍ ຮູ້ ຮັກ ແພງ ກັນ
ສອນ ແບ່ງ ປັນ ຄວາມ ຮັບ ຜິດ ຊອບ
ສອນ ປະ ກອບ ວຽກ ບ້ານ ການ ເຮືອນ
ພໍ່ ແມ່ ເຕືອນ ຂ້ອຍ ຟັງ ລະ ອຽດ
ຂ້ອຍ ບໍ່ ຄຽດ ທຽງ ຈົ່ມ ຊຸ ຊີ
ຂ້ອຍ ຮູ້ ດີ ວ່າ ເພິ່ນ ຮັກ ຂ້ອຍ ແທ້ໆ.






ພໍ່ແມ່ຂ້ອຍ

ຮັກຂ້ອຍອີຫລີ

# ຄຳຖາມ

໑. ເຈົ້າຄິດວ່າ ຄຳສອນຂໍ້ໃດ ມີປໂຍດ ແລະ ເໝາະສົມສຳລັບ ເຈົ້າເອງ ?

໒. ຍາພໍ່ ຍາແມ່ ຂອງເຈົ້າ ສອນໃຫ້ເຈົ້າປະຕິບັດຢ່າງໃດແດ່ ? ອັນໃດເຈົ້າມັກ ? ອັນໃດ ເຈົ້າບໍ່ມັກ ?

໓. ພວກເຮົາຄວນປະພຶດຕົວແນວໃດ ຈຶ່ງຈະໄດ້ຊື່ວ່າ ເປັນລູກທີ່ ດີຂອງພໍ່ແມ່ ?

໔. ລຸງຕາ ແມ່ນຜູ້ໃດ ? ເປັນຫຍັງເຮົາຈຶ່ງຢຳເກງຕໍ່ຜູ້ໃຫຍ່ ? ຖ້າບໍ່ນັບຖືຈະ ເປັນຫຍັງ ?

໕. ຄວາມຮັບຜິດຊອບ ແປວ່າຢ່າງໃດ ?



ແມ່ຮັກລູກ ບໍ່ມີຫຍັງຈະປຽບປານຈິງແທ້

ບົດຮຽນ ທີ ໒

# ປູ່ຍ່າ ແລະ ພໍ່ເຖົ້າແມ່ເຖົ້າ

Lesson 2

## PATERNAL AND MATERNAL GRANDPARENTS

# ປູ່ ຍ່າ ແລະ ພໍ່ເຖົ້າ ແມ່ເຖົ້າ

ຄຳວ່າ "ປູ່" ໝາຍເຖິງ ພໍ່ ຂອງ ພໍ່ເຮົາ. "ຍ່າ" ແມ່ນ ແມ່ ຂອງ ພໍ່ເຮົາ. ດ້ວຍ ເຫດ ດັ່ງ ກ່າວ ນີ້, ປູ່ ແລະ ຍ່າ ຈຶ່ງ ເປັນ ພໍ່ ແມ່ ຄືງໆ ຂອງ ພໍ່ ຂອງເຮົາ.

ສ່ວນ ຄຳວ່າ "ພໍ່ເຖົ້າ" ນັ້ນ ໝາຍ ເຖິງ ພໍ່ ຂອງ ແມ່ ຂອງເຮົາ ; ແລະ "ແມ່ເຖົ້າ" ກໍ່ ໝາຍເຖິງ ແມ່ ຂອງ ແມ່ ຂອງ ເຮົາ ເອງ. ເພາະສະນັ້ນ ແມ່ ຂອງເຮົາ ຈຶ່ງ ເປັນ ລູກສາວ ຄືງໆ ຂອງ ພໍ່ເຖົ້າ ແມ່ ເຖົ້າ.

ປູ່ ແລະ ຍ່າ ເອີ້ນ ແມ່ ຂອງ ເຮົາ ເປັນ "ລູກໃພ້".
ພໍ່ເຖົ້າ ແລະ ແມ່ເຖົ້າ ຊໍ້າ ເອີ້ນ ພໍ່ ຂອງ ເຮົາ ນັ້ນ ເປັນ
" ລູກ ເຂີຍ " .

ອີກ ປະການນຶ່ງ, ພໍ່ ຂອງ ເຮົາ ເອີ້ນ ພໍ່ເຖົ້າ ເປັນ
" ພໍ່ ຕາ " ແລະ ເອີ້ນ ແມ່ ເຖົ້າ ເປັນ " ແມ່ ນາຍ ".
ແມ່ ຂອງ ເຮົາ ກໍ ເອີ້ນ ປູ່ຍ່າ ເປັນ "ພໍ່ປູ່ ແມ່ຍ່າ".

ປູ່ຍ່າ ແລະ ພໍ່ເຖົ້າແມ່ເຖົ້າ ຂອງ ພວກ ເຮົາ

ຊໍ້າ ເອີ້ນ ກັນວ່າ ເປັນ " ພໍ່ດອງ ແມ່ດອງ ".

ພວກ ເຮົາ ເປັນ ຫລານຄົງໆ ຂອງ ປູ່ຍ່າ ແລະ ພໍ່ເຖົ້າ ແມ່ເຖົ້າ . ພວກ ເຮົາ ຕ້ອງ ຮັກ ແລະ ນັບຖື ປູ່ຍ່າ ແລະ ພໍ່ເຖົ້າ ແມ່ເຖົ້າ ຂອງ ເຮົາ . ເພິ່ນ ຮັກ ພໍ່ ແມ່ ຂອງ ເຮົາ ແລະ ເປັນ ຫ່ວງ ນຳ ອະນາຄົດ ຂອງ ພວກ ເຮົາ ຕລອດ ມາ .



ຍາຍ່າ ແລະ ຍາປູ່ ຂອງຂ້ອຍ

# ຄຳຖາມ

໑. ເຈົ້າ ຮູ້ຊື່ ຍາປູ່ ຂອງ ເຈົ້າ ບໍ ? ເພິ່ນ ແລະ ຍາ ຍ່າ ຂອງ ເຈົ້າ ນັ້ນ ມີອາ ຍຸ ຍືນໄດ້ ຈັກ ປີ ແລ້ວ ? ດຽວນີ້ ພວກ ເພິ່ນ ຢູ່ໃສ ?

໒. ຍາ ແມ່ ຂອງ ເຈົ້າ ເປັນ ລູກ ຜູ້ ທີ່ ເທົ່າ ໃດ ຂອງ ຍາ ພໍ່ ເຖົ້າ ຍາ ແມ່ ເຖົ້າ ? ຍາ ພໍ່ ເຖົ້າ ແລະ ຍາ ແມ່ ເຖົ້າ ຂອງ ເຈົ້າ ເກີດ ຢູ່ ໃສ ?

໓. ຢູ່ໃນ ຄອບ ຄົວ ຂອງ ເຈົ້າ , ຍາ ພໍ່ ແລະ ຍາ ແມ່ ຂອງ ເຈົ້າ ຍັງໄດ້ ເລົ່າ ນິ ທານ ຫລື ປະວັດ ຄອບ ຄົວ ໃຫ້ ເຈົ້າ ຟັງ ແດ່ ບໍ ? ຍາ ຍ່າ ຂອງ ເຈົ້າ ມີ ອ້າຍ ນ້ອງ ນຳ ກັນ ທັງ ໝົດ ຈັກ ຄົນ ?

໔ ເປັນ ຫຍັງ ປູ່ ຍ່າ ແລະ ພໍ່ ເຖົ້າ ແມ່ ເຖົ້າ ຈຶ່ງ ຄອນ ຮັກ ຫລານ ແລະ ສັ່ງ ສອນ ຫລານ ຢູ່ ເລື້ອຍ ໆ ?

໕ ເຮົາ ຜູ້ ທີ່ ເປັນ ຫລານ ນີ້ , ເຮົາ ຄອນ ປະຕິ ບັດ ຢ່າງ ໃດ ແດ່ ຕໍ່ ຍາ ປູ່ , ຍາ ຍ່າ , ຍາ ພໍ່ ເຖົ້າ ແລະ ຍາ ແມ່ ເຖົ້າ ຂອງ ເຮົາ ?

ບົດຮຽນທີ ໓

# ຄອບຄົວຂອງເອື້ອຍຂ້ອຍ

Lesson 3

# MY SISTER'S FAMILY

# ຄອບຄົວ ຂອງ ເອື້ອຍ ຂ້ອຍ

ນາງ ບົວທອງ ສິນແກ້ວມະນີໃສ ແມ່ນ ເອື້ອຍ ຄີງໆ ຂອງ ຂ້ອຍ . ລາວ ເປັນ ເອື້ອຍ ກກ . ລາວ ມີ ນ້ອງ ໔ ຄົນ . ຜູ້ ຖັດ ລາວ ລົງມາ ແມ່ນ ອ້າຍ ກອງເພັດ . ຫລຸດ ອ້າຍ ກອງເພັດ ລົງມາ ແມ່ນ ຂ້ອຍ ເອງ . ຂ້ອຍ ຊື່ ເກດສະນາ . ຂ້ອຍ ມີ ນ້ອງ ສອງ ຄົນ . ຜູ້ ເກີດ ຖັດ ຂ້ອຍ ແມ່ນ ນ້ອງສາວ . ຊື່ ລາວ ຮຽກວ່າ ປາຣະມີ . ຜູ້ ຖັດ ປາຣະມີ ລົງໄປ

ແມ່ນ ວິນັຍ. ວິນັຍ ເປັນ ນ້ອງ ຊາຍ ແລະ ເປັນ ນ້ອງ ຊາຍ ຫລ້າ ຂອງ ພວກ ຂ້ອຍ ທັງ ໝົດ.

ພໍ່ ມາ ຮອດ ປີ ໑໙໗໔, ຫລັງ ຈາກ ຮຽນ ຈົບ ມະຫາ ວິທຍາ ລັຍ ແລ້ວ, ເອື້ອຍ ບົວ ທອງ ກໍໄດ້ ແຕ່ງ ງານ ນໍາ ອ້າຍ ສົມ ນຶກ ບຸນ ຍາ ນຸ ວົງ. ອ້າຍ ສົມ ນຶກ ແລະ ເອື້ອຍ ບົວ ທອງ ເປັນ ຄູ່ ຮັກ ກັນ ມາ ໄດ້ ເກືອບ ໕ ປີ ກ່ອນ ວັນ ແຕ່ງ ງານ.

ຫລັງ ຈາກ ວັນ ນັ້ນ, ເອື້ອຍ ບົວ ທອງ ກໍໄດ້ ປ່ຽນ

ນາມສະກຸນ ຈຶ່ງ ກາຍ ມາ ເປັນ ນາງ ບົວທອງ ບຸນຍານຸວົງ. ອ້າຍ ສົມ ນຶກ ເຊິ່ງ ເປັນ ຜົວ ຫລື "ສາມີ" ຂອງ ເອື້ອຍ ບົວ ທອງ ກໍ ໄດ້ ກາຍ ມາ ເປັນ "ອ້າຍ ເຂີຍ" ຂອງ ພວກ ຂ້ອຍ ທັງ ໔ ນ້ອງ ອ້າຍ.

ອ້າຍ ເຂີຍ ຂອງ ຂ້ອຍ ເປັນ ຄົນ ປະເສີດ ທີ່ ສຸດ. ລາວ ຮັກ ເອື້ອຍ ບົວ ທອງ ດ້ວຍ ຄວາມ ຮັກ ອັນ ບໍຣິສຸດ. ລາວ ບໍ່ ຟ້າວ ຈັກ ຊວນ ໃຫ້ ເອື້ອຍ ຂ້ອຍ ປະລະ ການ ສຶກ ສາ ເພື່ອ ແຕ່ງ ງານ ກັບ ລາວ. ອ້າຍ ສົມ ນຶກ ເອງ ບໍ່



ເອື້ອຍບົວທອງ
ຈະບໍ່ໄລລາປະ
ຮີດຄອງ ແລະ
ປະເພນີອັນດີ
ຂອງລາວເຮົາ

ໄດ້ ຮັບ ການ ສຶກສາ ສູງ ເພາະວ່າ ລາວ ເປັນ ລູກ ກໍາ
ພ້າ ພໍ່ ແລະ ຕ້ອງ ເຮັດ ວຽກ ຫາ ລາຍໄດ້ ເພື່ອ ລ້ຽງ
ແມ່ ແລະ ອຸດ ໜູນ ນ້ອງ ສອງ ຄົນ .

ອ້າຍ ສົມ ນຶກ ນັບ ຖື ຍາ ພໍ່ ຍາ ແມ່ ຂອງ ພວກ ຂ້ອຍ
ຕລອດ ມາ ເໝືອນ ດັ່ງ ວ່າ ພໍ່ ແມ່ ຂອງ ພວກ ຂ້ອຍ ເປັນ
ພໍ່ ແມ່ ຄືງ ໆ ຂອງ ລາວ . ເອື້ອຍ ບົວ ທອງ ກໍ ຮັກ ແລະ
ນັບ ຖື ຄອບ ຄົວ ຂອງ ອ້າຍ ສົມ ນຶກ ຢ່າງ ເຕັມ ໃຈ ເຊັ່ນ
ດຽວ ກັນ .

ໝູ່ຄູ່ສນິດສນົມ
ຈຳນວນນຶ່ງຂອງ
ເອື້ອຍບົວທອງ



ອ້າຍ ສົມ ນຶກ ພາກ ພູມໃຈ ທີ່ໄດ້ ເມັຍ ຜູ້ ດີ ແລະ ມີ ວິ ຊາ ຄວາມ ຮູ້ ສູງ . ເອື້ອຍ ຂ້ອຍ ຖື ວ່າ ອ້າຍ ສົມ ນຶກ ເປັນ ຄົນ ລາວ ພິ ເສດ , ເປັນ ລູກ ຜູ້ ຊາຍ ເຕັມ ສ່ວນ ແລະ ເຂົ້າ ໃຈ ຄວາມ ຮັກ ແທ້ ໃນ ປະ ເທດ ໃໝ່ ທີ່ ມີ ຄວາມ ສີ ວິ ລັຍ ຈະ ເຣີນ ຮຸ່ງ ເຣືອງ ແລ້ວ .

ເອື້ອຍ ບົວ ທອງ ເປັນ ຄົນ ຮຽນ ສູງ ແຕ່ ມີ ກິ ຣິ ຍາ ອ່ອນ ຫວານ , ຮອບ ຄອບ , ບໍ່ ຂົ່ມ ເພິ່ນ ຍໍ ໂຕ , ແລະ ບໍ່ ຍອມ ຟັງ ຄວາມ ຊຸບ ຊິບ ສັບ ສໍ່ . ລາວ ຮັກ ອ້າຍ ສົມ ນຶກ

ເໜືອ ກວ່າ ສິ່ງໃດໆ ໃນໂລກນີ້.

ກ່ອນ ຈະຍ້າຍ ອອກໄປ ສ້າງ ຄອບຄົວໃໝ່, ເອື້ອຍ ບົວ ທອງໄດ້ ຮຽກ ປະຊຸມ ພາຍໃນ ຄອບ ຄົວ ສິນ ແກ້ວ ມະນີໃສ. ຂ້ອຍ ຈະ ບໍ່ ລືມ ອັນ ນັ້ນ ເດັດ ຂາດ. ລາວໄດ້ ສັ່ງ ໃຫ້ ພວກ ຂ້ອຍ ຮັກ ແພງ ກັນ, ອູ້ມ ຊູ ກັນ ແລະ ນັບ ຖື ພໍ່ ແມ່ ຕລອດ ຊີ ວິດ. ລາວ ສັ່ງ ໃຫ້ ພວກ ຂ້ອຍ ຮຽນ ເບິ່ງ ກວ້າງ ແລະ ເຫັນໄກ. ລາວ ສັ່ງ ໃຫ້ ຖື ການ ສຶກສາ ເປັນ ຫລັກ ຄ້ຳ ແລະ ເຊື່ອ ຫມັ້ນ ເອງ ຢູ່ ສເມີ.

# ຄຳຖາມ

໑. ເຈົ້າເປັນລູກຜູ້ທີ່ເທົ່າໃດ ? ເຈົ້າເກີດຖັດຜູ້ໃດ ? ເຈົ້າມີນ້ອງຈັກຄົນ ?

໒. ເຈົ້າຮູ້ສຶກວ່າ ອ້າຍນ້ອງຄີງໆ ຄວນຮັກແພງກັນ ແລະ ຊິດຊ່ອຍເຊິ່ງກັນ ແລະ ກັນ ແບບໃດ ?

໓. ເຈົ້າຄິດວ່າ ຄອບຄົວທີ່ດີແທ້ນັ້ນ ຄວນມີລັກສະນະແນວໃດ ?

໔. ຄອບຄົວຂອງເຈົ້ານັບຖືເຈົ້າບໍ່ ? ຄວາມນັບຖືດັ່ງກ່າວມີຄວາມສຳຄັນຫຍັງສຳລັບເຈົ້າ ? ເຈົ້ານັບຖື ແລະ ຮັກ ຄອບຄົວຂອງເຈົ້າເອງ ຫລາຍປານໃດ ?

໕. ລູກໃພ້ ລູກເຂີຍ ແລະ ພໍ່ຕາແມ່ນາຍ ຄວນມີຄຸນສົມບັດແນວໃດ ຈຶ່ງບໍ່ຜິດຂ້ອງຕ້ອງຖຽງກັນ ?

ບົດຮຽນ ທີ ໔

# ລູກສາວ ແລະ ລູກຊາຍ

Lesson 4

## DAUGHTERS AND SONS

# ລູກສາວ ແລະ ລູກຊາຍ

ໃນ ສັງຄົມ ລາວ ເຮົາ ຕັ້ງ ແຕ່ ເກົ່າ ເມືອ ຫລັງ ພັນ , ພວກ ລູກສາວ ແລະ ຫລານສາວ ທັງຫລາຍ ບໍ່ ຄ່ອຍ ໄດ້ ມີ ໂອ ກາດ ເຂົ້າ ໂຮງ ຮຽນ . ບັນ ດາ ພໍ່ ແມ່ ພີ່ ນ້ອງ ຂອງ ລາວ ເຮົາ ໃນ ເບື້ງ ນັ້ນ , ໂດຍ ທົ່ວ ໄປ ແລ້ວ , ຍັງ ຄຶດ ຕາມ ຫລັກ ສູດ ສັງ ຄົມ ທີ່ ເກົ່າ ແກ່ ແລະ ເຊື່ອ ຖື ວ່າ ລູກ ຊາຍ ມີ ຄວາມ ສຳ ຄັນ ຍິ່ງ ກວ່າ ລູກ ສາວ .

ໃນ ກາລະ ປັດຈຸບັນ ເອງ , ຍັງມີ ຫລາຍ ຄອບ
ຄົວ ລາວ ຍອມ ຮັບ ວ່າ ລູກ ຜູ້ ຍິງ ຕັ້ງ ເກີດ ມາ ເປັນ
ແມ່ ເຮືອນ . ໃນ ຄວາມ ຄິດ ຂອງ ຄົນໂບຮານ ນັ້ນ ,
ໜ້າ ທີ່ ຂອງ ແມ່ ເຮືອນ ດີ ແມ່ນ ເປັນ ແມ່ຄົວດີ , ຮູ້
ເອົາໃຈ ຜົວ , ຮູ້ ຮັບ ແຂກ , ດູ ໝັ່ນ ຕໍ່ ວຽກ ຢ້າວ
ການ ເຮືອນ , ຊ່າງ ພົວພັນ ກັບ ພີ່ ນ້ອງ ໃກ້ ຄຽງ ,
ຖືສິນ ກິນ ທານ ແລະ ພາກ ພຽນ ຕໍ່ ການ ລ້ຽງລູກ
ເປັນ ສ່ວນ ໃຫຍ່ .

ກົງກັນຂ້າມ , ຄົນໂບຮານເຫັນວ່າ ລູກຜູ້ຊາຍ ໄດ້ເກີດມາ ເພື່ອສືບເຊື້ອແທນແນວ , ເພື່ອຮັບໜ້າທີ່ສຳຄັນຕໍ່ການຄົງຢູ່ຂອງຄອບຄົວ , ເພື່ອຮັກສາຮີດຄອງປະເພນີ , ເພື່ອຊິດຊ່ວຍຍາດຕິພີ່ນ້ອງໃກ້ຄຽງທັງໝົດ , ເພື່ອນຳພາໃນການປົກຄອງ , ເພື່ອມີໜ້າທີ່ຮັບຜິດຊອບຕໍ່ສັງຄົມ , ຕໍ່ເສດຖກິດ ແລະ ຕໍ່ວຽກບ້ານການເມືອງໂດຍສະເພາະ.

ບັດນີ້ ພວກເຮົາໄດ້ມາຮອດ ສະຫະຣັດ



ບັນດາ ແມ່ປ້າ ນ້າສາວຈຳນວນນຶ່ງ ທີ່ບໍ່ໄດ້ຮັບການສຶກສາ
ສູງເທົ່າ ທີ່ຄວນ

ອະເມຣິກາ ແລ້ວ . ພວກເຮົາໄດ້ ເຫັນເຕັມ ຕາ ວ່າ
ຜູ້ຍິງ ອະເມຣິກັນ ມີ ໜ້າທີ່ ຮັບຜິດຊອບ ສູງ ຕໍ່ສັງ
ຄົມ ທັງ ໝົດ ແລະ ສາມາດ ແຂ່ງ ວຽກ ຫລື ແຂ່ງ
ວິຊາ ຄວາມຮູ້ ນຳ ຜູ້ຊາຍ ໄດ້ ຢ່າງ ສະບາຍ .

ພວກເຮົາ ຕ້ອງ ສົ່ງເສີມ ໃຫ້ ບັນດາ ຄອບຄົວ
ລາວ ປັບປຸງ ຖານະ ຂອງ ລູກ ຜູ້ຍິງ ໃຫ້ ສເມີພາບ
ກັບ ລູກ ຜູ້ຊາຍ . ພໍ່ແມ່ ທີ່ ຮັກ ລູກ ຕ້ອງ ເຂົ້າໃຈ
ວ່າ ລູກສາວ ຫລື ລູກຊາຍ ກໍ່ ແມ່ນ ລູກ ຄິງໆ ແທ້ .

ຢູ່
ໃນ
ໂລກ
ປັດຈຸບັນນີ້



ຜູ້ຍິງທີ່ໄດ້ຮັບການສຶກສາສູງສາມາດແຂ່ງວິຊາສເບີ

# ຄຳຖາມ

໑. ຄົນລາວເຮົາ ມັກ ອວຍພອນໃຫ້ ຄູ່ ສົມຣົດໃໝ່ ວ່າ : " ຂໍໃຫ້ໄດ້ລູກຜູ້ຊາຍ ! " ເຈົ້າມີຄວາມຮູ້ສຶກ ແນວໃດ ກ່ຽວກັບພອນ ດັ່ງກ່າວນີ້ ?

໒. ເຈົ້າ ມີ ຄວາມເຫັນ ແນວໃດ ກ່ຽວກັບ ບັນດາ ພໍ່ແມ່ ຄົນລາວເຮົາ ບາງຈຳນວນ ທີ່ ຢາກໃຫ້ ລູກສາວຂອງຕົນ, ອາຍຸ ໑໗ ຫລື ໑໘ ປີ, ແຕ່ງງານ ແລະ ສ້າງ ຄອບຄົວໄວໆ ?

໓. ເຈົ້າ ຄິດ ແນວໃດ ກ່ຽວ ກັບ ນັກ ຮຽນ ຍິງ ທີ່ ສຣະ ການ ສຶກສາ ຂັ້ນ ມະຫາວິທຍາລັຍ ເພາະ ຢ້ານ "ອ້າຍບ່າວ" ບໍ່ຄອຍຖ້າ ?

໔. ເຈົ້າມີ ທັສນະ ແນວໃດ ກ່ຽວກັບ ບັນດາ ຜູ້ຊາຍລາວ ທີ່ ລັງກຽດ ຍິງສາວ ຜູ້ມີ ການ ສຶກສາ ສູງກວ່າ ຕົນ ?

໕. ເຮັດແນວໃດ ຜູ້ຍິງລາວ ເຮົາຈຶ່ງ ຈະໄດ້ຮັບ ຄວາມນັບຖື ເທົ່າທີ່ ຄວນ ?

ບົດຮຽນ ທີ ໕

# ການດຳຣົງຊີວິດໃໝ່

Lesson 5

## BEGINNING A NEW LIFE

# ການດຳຣົງຊີວິດໃໝ່

ພາຍຫລັງ ເຫດການອັນໂຫດຮ້າຍ ຢູ່ແຫລມ ອິນດູຈີນ ໃນປີ ໑໙໗໕ , ພົລເມືອງລາວ ຫລາຍ ໝື່ນ ຄອບຄົວ , ເຊັ່ນ ດຽວກັນກັບ ບັນດາ ຊາວ ອົພຍົບ ຂແມນ ແລະ ຫວຽດນາມ , ໄດ້ພາກັນ ໜີ ເຂົ້າມາ ລີ້ພັຍ ຢູ່ ສະຫະຣັດ ອະເມຣິກາ.

ແຕ່ລະ ຄອບຄົວ ມີ ຄວາມ ຫວັງ ຢ່າງແຮງ ກ້າ ເພື່ອ ຈັດ ສ້າງ ພື້ນ ຖານ ແຫ່ງ ຊີວິດໃໝ່

ນັ້ ໃຫ້ ແໜ້ນ ໜາ ຖາ ວອນ. ມີ ຫລາຍ ຄົນ
ໃຫ້ ຂໍ້ ສັງ ເກດ ວ່າ ການ ດຳ ຣົງ ຊີ ວິດ ພາຍ ໃນ
ປະ ເທດ ໃໝ່ ນີ້ ບໍ່ ເປັນ ການ ງ່າຍ ດາຍ ເພາະ
ວ່າ ຊາວ ອົພ ຍົບ ທັງ ຫລາຍ ຕ້ອງ ໄດ້ ພາກ ພຽນ
ຮຽນ ພາ ສາ ໃໝ່ ແລະ ຕ້ອງ ອົດ ສາ ພະ ຍາ ຍາມ
ປະ ກອບ ວິ ຊາ ອາ ຊີບ ໃໝ່ ຕາມ ຄວາມ ຕ້ອງ ການ
ຂອງ ຕລາດ ແຮງ ງານ ອະ ເມ ຣິ ກັນ ທີ່ ປ່ຽນ ແປງ
ສະ ພາບ ຢູ່ ບໍ່ ເຊົາ.



ພວກເຮົາ ຕ້ອງ
ຂຍາຍ
ສີມື
ແລະ
ຄວາມຮູ້
ຂຶ້ນໄປເລື້ອຍໆ

ເພາະວ່າ
ຕລາດແຮງງານ ປ່ຽນແປງສະພາບຢູ່ບໍ່ເຊົາ

ຈະ ເຖິງຢ່າງໃດກໍດີ , ບັນຫາ ຕ່າງ ໆ ນາ ໆ ທີ່ ເນື່ອງ ມາຈາກ ລະບົບ ຊີວິດ ການ ເປັນຢູ່ຂອງ ສະຫະຣັດ ອະເມຣິກາ ນີ້ໄດ້ ເຮັດໃຫ້ ຄົນລາວ ເຮົາ ຕ້ອງ ສົນໃຈ ນໍາ ວິຊາສະເພາະ ແລະ ທັງໄດ້ ພາໃຫ້ ພໍ່ແມ່ ພີ່ນ້ອງ ເຂົ້າໃຈ ຄວາມສໍາຄັນ ຂອງ ການ ສຶກສາ ຫລາຍ ຂຶ້ນ ກວ່າ ເກົ່າ .

# ຄຳຖາມ

໑. ຢູ່ ແຫລມ ອິນດູຈີນ ມີ ເຫດການ ຫຍັງ ເກີດ ຂຶ້ນ ໃນ ປີ ໑໙໗໕ ?

໒. ເຫດການ ດັ່ງກາວ ໄດ້ ກະທົບ ກະເທືອນ ຄອບຄົວ ຂອງ ເຈົ້າ ຫລາຍ ປານໃດ ?

໓. ຄອບຄົວ ຂອງ ເຈົ້າ ມາ ຮອດ ສະຫະຣັດ ໃນ ປີ ໃດ ? ເຈົ້າ ເອງ ຮູ້ສຶກ ຢ່າງໃດ ແດ່ ເມື່ອ ເຈົ້າ ມາ ເຖິງ ສະຫະຣັດ ໃໝ່ໆ ?

໔. ຄອບຄົວ ຂອງ ເຈົ້າ ໄດ້ ພົບພໍ້ ກັບ ບັນຫາ ຫຍັງ ແດ່ ໃນ ປີທຳອິດ ? ພວກ ເຈົ້າ ໄດ້ ພາກັນ ແກ້ໄຂ ບັນຫາ ຕ່າງໆ ເຫລົ່ານັ້ນ ດ້ວຍ ວິທີ ໃດ ?

໕. ເຈົ້າ ຄິດວ່າ ພວກ ເຮົາ ຄວນ ດຳຣົງ ຊີວິດ ແລະ ປະພຶດຕົວ ແບບ ໃດ ເພື່ອ ສະແດງ ໃຫ້ ເຫັນ ຢ່າງ ແຈ່ມ ແຈ້ງ ວ່າ ຄົນລາວ ມີ ວັທນະທັມ ສູງ ແລະ ບໍ່ລືມ ບຸນຄຸນ ຕໍ່ ຜູ້ ທີ່ ສ້າງ ຄວາມດີ ?

ບົດຮຽນ ທີ ໖

# ປໂຍດຂອງເວລາ

Lesson 6

## THE USEFULNESS OF TIME

# ປໂຍດ ຂອງ ເວລາ

ມື້ນຶ່ງ, ນັບທັງເວັນ ແລະ ຄືນ, ມີພຽງແຕ່ ໒໔ ຊົ່ວໂມງ. ແຕ່ປານນັ້ນ, ພວກເຮົາຈະສັງເກດໄດ້ວ່າ ບາງຄົນປະກົດ ມີ ເວລາ ຫລາຍ, ບາງຄົນ ມີ ເວລາ ໜ້ອຍ ແລະ ບາງຄົນ ຄື ບໍ່ ມີ ເວລາ ເລີຍ.

ຕາມທີ່ຈິງແລ້ວ, ມະນຸດເຮົາຢູ່ໃນໂລກນີ້ ບໍ່ ຄ່ອຍ ໃຊ້ ສອຍ ເວລາ ໒໔ ຊົ່ວໂມງ ນັ້ນໄປ ໃນ ທ່ານອງ ດຽວ ກັນ. ມັນ ເປັນ ເຊັ່ນ ນີ້ ກໍ່ ເນື່ອງ

ຈາກວ່າ ຄົນເຮົາ ມາຈາກ ຫລາຍບ່ອນ, ມີຄວາມຄິດ
ຫລາຍ ແນວ, ມີ ຄວາມຮູ້ ຫລາຍຢ່າງ, ມີຈິດໃຈ
ບໍ່ຄືກັນ, ມີຄວາມຝັນ ບໍ່ຄືກັນ, ມີ ຄວາມຂັດຂ້ອງ
ຕ້ອງການ ແຕກ ຕ່າງກັນ, ແລະ ອາດຈະເຂົ້າໃຈ
ຄວາມ ໝາຍ ຂອງ ຊີວິດ ມະນຸດ ເຮົາ ເອງໄປຄົນ
ລະ ທິດ ທາງ.

ແຕ່ ເຖິງຢ່າງໃດກໍດີ, ພວກເຮົາ ທັງໝົດ
ເຊິ່ງໄດ້ ພາກັນ ໜີ ລອດ ພົ້ນໂພຍ ພັຍ ອັນ ຕະ

ລາຍ ມາ ແລ້ວ ນັ້ນ ຄວນ ຄຳ ນຶງ ເຖິງ ສະຖານະ ການ ທີ່ ຫຍຸ້ງ ຍາກ ລຳ ບາກ ຂອງ ເພື່ອນ ພີ່ ນ້ອງ ຮ່ວມ ຊາດ ຂອງ ເຮົາ ຢູ່ ສເມີ . ພວກ ເຮົາ ຕ້ອງ ພິ ຈາ ຣະ ນາ . ພວກ ເຮົາ ຄວນ ຈະ ໃຊ້ ເວລາ ທີ່ ຍັງ ເຫລືອ ຢູ່ ບໍ່ ຫລາຍ ນີ້ ດ້ວຍ ຄວາມ ລະມັດລະວັງ ແລະ ຮອບ ຄອບ ທີ່ ສຸດ .

ສະຫະຣັດ ອະເມຣິກາ ເປັນ ປະເທດ ທີ່ ຍິ່ງ ໃຫຍ່ ເລີດ . ຢ່າ ພາດ ໂອກາດ ຂອງ ເຈົ້າ ແທ້ໆ ເນີ !

ຄວາມ ສງົບ ສຸກ
ຈະ ເກີດ ຂຶ້ນ ໄດ້
ກໍ່ ແຕ່ ໃນ ເມື່ອ
ພວກເຮົາ ຊ່ວງ ໃຊ້
ເສຣີພາບ ແລະ ເວລາ
ໃຫ້ ເປັນ ປໂຍດ



# ຄຳຖາມ

໑. ຫລັງຈາກ ເລີກໂຮງ ຮຽນ ເມືອ ເຮືອນ ແລ້ວ ເຈົ້າ ເຮັດ ຫຍັງ ແດ່ ແລະ ໃຊ້ ເວລາ ຫລາຍ ປານ ໃດ ເພື່ອ ກິຈ ການ ຕ່າງ ໆ ເຫລົ່າ ນັ້ນ ?

໒. ພໍ່ ເຖິງ ຍາມ ແລງ ມາ, ຫລັງຈາກ ໂມງ ເລີກ ການ ແລ້ວ, ຍາ ພໍ່ ຍາ ແມ່ ຂອງ ເຈົ້າ ມີ ເວລາ ດູ ແລ ແລະ ຕິດ ຕາມ ການ ຮຽນ ຂອງ ເຈົ້າ ຫລາຍ ປານ ໃດ ?

໓. ໃນ ມື້ ວັນ ເສົາ ແລະ ວັນ ອາ ທິດ ເດ ຄອບ ຄົວ ຂອງ ເຈົ້າ ມັກ ໄປ ໃສ ມາ ໃສ ແດ່ ?

໔. ໃນ ຖາ ນະ ທີ່ ເຮົາ ເປັນ ອົພ ຍົບ ນີ້ ເຮົາ ຄວນ ໃຊ້ ເວລາ ໄປ ໃນ ທາງ ນອງ ໃດ ເພື່ອ ໃຫ້ ວຽກ ງານ ທີ່ ເປັນ ປໂຍດ ບັນ ລຸ ຜົນ ດ້ວຍ ດີ ?

໕. ນັກ ປະ ພັນ ຄົນ ນຶ່ງ ເວົ້າ ວ່າ : " ມະ ນຸດ ບໍ່ ສາ ມາ ດ ຄວບ ຄຸມ ເວ ລາ ", ເຈົ້າ ຄວບ ຄຸມ ເວ ລາ ຂອງ ເຈົ້າ ດ້ວຍ ວິ ທີ ໃດ ?

ບົດຮຽນ ທີ ໗

# ຮຽນເພື່ອຮູ້

Lesson 7

## MY INTEREST IN LEARNING

# ຮຽນເພື່ອຮູ້

ໃນສະໄໝທີ່ຂ້ອຍຍັງເຂົ້າໂຮງຮຽນປະຖົມສຶກສາຢູ່ນັ້ນ, ນາຍຄູຂອງຂ້ອຍໄດ້ເຮັດໃຫ້ຂ້ອຍສົນໃຈນຳທຸກໆວິຊາທີ່ເພິ່ນສອນ. ຂ້ອຍຮູ້ສຶກວ່າແຕ່ລະວິຊາມີຄວາມສຳຄັນບໍ່ໜ້ອຍ. ຂ້ອຍສົນໃຈນຳວິຊາເລກຫລາຍ ເພາະວ່າວິຊາເລກ ຫລື ຄະນິດສາດນີ້ ສອນໃຫ້ຂ້ອຍຮູ້ສົມ, ຮູ້ລົບ, ຮູ້ຄູນ, ຮູ້ຫານ

ແລະ ຮູ້ຄຳນວນໂດຍທົ່ວໄປ. ໃຜເກັ່ງເລກຜູ້ນັ້ນ
ຈະເຂົ້າໃຈວິຊາວິທະຍາສາດໄດ້ງ່າຍ.

ພາສາອັງກິດ ເປັນອີກວິຊານຶ່ງ ທີ່ພາໃຫ້
ຂ້ອຍມີຄວາມສົນໃຈນຳຫລາຍ. ຂ້ອຍເຊື່ອແນ່
ວ່າ ພາສາອັງກິດຈະມີຄວາມສຳຄັນພິເສດຕໍ່
ອະນາຄົດຂອງຂ້ອຍເອງ. ເພາະສະນັ້ນແລ້ວ, ຂ້ອຍ
ຈຶ່ງຕັ້ງໃຈຟັງສຳນຽງຂອງແຕ່ລະສັບໃໝ່ໃຫ້ດີ
ແລະພະຍາຍາມຜັນສຽງໃຫ້ຄືເທົ່າທີ່ຈະຄືໄດ້.



ເຄື່ອງໃຊ້ ສ່ວນ ນຶ່ງ
ໃນ ວິທີ ການ ຄົວກິນ ແບບລາວ

ຂ້ອຍ ມັກ ອ່ານ ປຶ້ມ ພາສາ ອັງກິດ . ຂ້ອຍ ມັກ ອ່ານ ກ່ຽວ ກັບ ເຣື່ອງ ຄວາມ ຮູ້ ຮອບ ຕົວ , ເຣື່ອງ ໄປ ທ່ອງ ທ່ຽວ ຕາມ ປະເທດ ຕ່າງໆ ແລະ ເຣື່ອງ ຕະລົກ ເບົາສມອງ ໂດຍ ສະເພາະ .

ວິຊາ ສັງຄົມ ສຶກສາ ຫລື ສັງຄົມສາດ ສອນ ໃຫ້ ຂ້ອຍ ຮຽນ ສັງເກດ ແລະ ຄຳນຶງ ເຖິງ ບັນຫາ ຊີວິດ ການເປັນຢູ່ ຂອງ ມວນ ມະນຸດ ທັງຫລາຍ ທີ່ ມີ ພາສາ ແລະ ຮີດຄອງ ປະເພນີ ບໍ່ ຄື ກັນ . ຂ້ອຍ ມັກ ວິຊາ ສັງ

ຄົມສາດນີ້ ຫລາຍທີ່ສຸດ. ມັນພາໃຫ້ຂ້ອຍເກີດ
ມີຄວາມສົນໃຈ ຕໍ່ ຮີດຄອງປະເພນີ ແລະ ວັທນະ
ທັມ ຂອງ ຊົນ ຊາດ ຊົນ ເຜົ່າ ລາວ ເຮົາ ຫລາຍ ຂຶ້ນ.

ວິຊາ ພູມີສາດ ສອນໃຫ້ຂ້ອຍ ຮູ້ ກ່ຽວກັບ
ຫລາຍ ປະເທດ ທີ່ ມີ ດິນຟ້າ ອາກາດ ແລະ ເງື່ອນ
ໄຂ ແຫ່ງ ການ ດຳເນີນ ຊີວິດ ແຕກຕ່າງ ກັນ.

ວິຊາ ພົງສາວະດານ ຫລື ປະວັດສາດ ສອນ
ໃຫ້ ຂ້ອຍ ເຂົ້າໃຈ ສາຍເຫດ ແລະ ຕິດຕາມ ການ

ລາວເຮົາ
ເຄີຍເປັນຊາດ
ທີ່ມີ
ວັທນະທັມສູງ
ມາກ່ອນ



ເປັນມາ ຂອງ ແຕ່ລະປະເທດຊາດ ຕ່າງໆ ໃນໂລກ ມະນຸດເຮົາ.

ວິຊາ ສິນລະປະ ຫລື ສິນລະປະສາດໄດ້ພາ ໃຫ້ ຂ້ອຍ ຮູ້ ຈັກ ຄວາມ ງົດງາມ ຂອງ ທັມຊາດ, ພາ ໃຫ້ ຂ້ອຍ ເຂົ້າ ໃຈ ຄຸນງາມ ຄວາມດີ ຂອງ ນັກ ສິນ ລະປິນ ທັງຫລາຍ, ແລະ ເຮັດໃຫ້ ຂ້ອຍ ນັບ ຖື ຄຸນຄ່າ ຂອງ ສິນລະປະກັມໂດຍ ທົ່ວໄປ. ຂໍໃຫ້ ນັກ ສິນລະປິນ ລາວ ຈົ່ງ ຈະເຣີນ ຮຸ່ງ ເຮືອງ ເມືອ ໜ້າ.



ພວກ ເຮົາ

ຄວນ

ສົ່ງ ເສີມ

ແລະ

ສນັບ ສນຸນ

ນັກ ສິລປິນ

ທຸກ ທົ່ວ ເຜົ່າ

# ຄຳຖາມ

໑. ວິຊາສັງຄົມສຶກສາ ສາມາດສອນໃຫ້ເຮົາເປັນຄົນບໍ່ຄຶດແຄບດ້ວຍວິທີໃດ ?

໒. ວິຊາພູມີສາດ ແລະ ພົງສາວະດານ ສອນໃຫ້ເຮົາເຂົ້າໃຈ ຫຍັງ ຕື່ມ ກ່ຽວ ກັບ ສັງຄົມມະນຸດ ?

໓. ເປັນ ຫຍັງ ຄົນ ເຮົາ ຈຶ່ງ ຕ້ອງ ຂຍາຍ ຄວາມຮູ້ ອອກໄປເລີຍໆ?

໔. ເຈົ້າຄຶດວ່າ ຍ້ອນ ຫຍັງ ຄົນລາວເຮົາ ຈຶ່ງ ບໍ່ຄ່ອຍ ສຳເຣັດການສຶກສາ ຂັ້ນ ມະຫາ ວິທຍາລັຍ ?

໕. ປັດຈຸບັນນີ້ ເຈົ້າ ສົນໃຈ ບັນຫາ ຫຍັງໂດຍສະເພາະ?

ບົດຮຽນ ທີ ໘

# ປະເທດອິນດູຈີນ ທັງ ໕

Lesson 8

## THE 5 INDOCHINESE COUNTRIES

# ປະເທດ ອິນດູຈີນ ທັງ ໕

" ອິນດູຈີນ " ແມ່ນ ຄຳ ສັບ ຄຳ ນຶ່ງ ທີ່ ໝາຍ ເຖິງ ພື້ນ ແຜ່ນ ດິນ ຕ່ອນ ນຶ່ງ ທີ່ ຕັ້ງ ຢູ່ ລະຫວ່າງ ປະເທດ ອິນເດັຽ ແລະ ປະເທດ ຈີນ . ປະເທດ ຂອງ ລາວ ກໍ ເປັນ ປະເທດ ນຶ່ງ ຂອງ ໂຊງ ເຂດ ອິນ ດູຈີນ . ນອກ ຈາກ ປະເທດ ລາວ ແລ້ວ , ຍັງ ມີ ອີກ ໔ ປະເທດ ທີ່ ຮ່ວມ ຊື່ ເປັນ ກຸ່ມ ປະເທດ ອິນດູຈີນ ເຊັ່ນ ດຽວ ກັນ . ມອນ ປະເທດ ເຫົ່ລາ

ນັ້ນ ໄດ້ ແກ່ ປະເທດ ພະມ້າ, ປະເທດໄທ, ປະ
ເທດ ກັມພູຊາ ແລະ ປະເທດ ຫວຽດນາມ. ເພາະ
ສນັ້ນ ເອງ, ຢູ່ ສະຫະຣັດ ອະເມຣິກາ ໃນ ບາງຄັ້ງ
ບາງຄາວ ແລະ ຢູ່ ແຫ່ງ ອື່ນໆ, ດິນລາວ, ດິນ
ຫວຽດນາມ ຫລື ດິນ ຂເມນ ຈຶ່ງ ຍັງ ຖືກ ເອີ້ນວ່າ
ເປັນ ດິນ ອິນດູຈີນ.

ແຕ່ ຕາມ ທີ່ ຈິງ ແລ້ວ, ດິນລາວ, ດິນຂເມນ,
ດິນ ພະມ້າ, ດິນໄທ ຫລື ດິນ ຫວຽດນາມນັ້ນ


ປະ ເທດ ຈີນ
ປະເທດ
ອິນເດັຽ
ພະມ້າ
ລາວ
ຫວຽດ
ນາມ
ໄທ
ກັມພູຊາ

ກໍຫາກ ມີ ພາສາ ແຕກ ຕ່າງ ກັນ , ມາຈາກ ເຊື້ອຊາດ ແຕກ ຕ່າງ ກັນ , ແລະ ທັງ ມີ ຮີດ ຄອງ ປະເພນີ ຕັ້ງ ຫລາຍ ແນວ ບໍ່ ຄື ກັນ . ມີ ແຕ່ ຄົນໄທ ແລະ ຄົນ ລາວ ເທົ່ານັ້ນ ທີ່ ມີ ພາສາ ຄ້າຍ ຄຽງ ກັນ .

ເຖິງ ຢ່າງໃດ ກໍ ດີ , ຊາວ ອິນດູຈີນ ສາມາດ ຮັກ ແພງ ກັນ , ຊ່ອຍ ເຫລືອ ກັນ ແລະ ນັບຖື ເຊິ່ງ ກັນ ແລະ ກັນ .

# ຄຳຖາມ

໑. ປະເທດໃດໃນ ອິນດູຈີນ ເຄີຍ ເປັນ ຫືອ ເມືອງຂຶ້ນ ຂອງ ປະເທດ ຝຣັ່ງ ? ປະເທດໃດ ເຄີຍ ຢູ່ ພາຍໃຕ້ ການປົກ ຄອງ ຂອງ ປະເທດ ອັງກິດ ?

໒. ເປັນ ຫຍັງ ຄົນ ລາວ ເຮົາ ຈຶ່ງ ບໍ່ ສົນໃຈ ນຳ ປະເທດພະມ້າ ?

໓. ເປັນ ຫຍັງ ຄົນ ລາວ ເຮົາ ບໍ່ ມີ ຄວາມ ຮູ້ ພື້ນ ຖານ ອັນ ຄວນ ກ່ຽວ ກັບ ປະເທດໄທ , ສັງຄົມໄທ ແລະ ພາສາໄທ ?

໔. ເຈົ້າ ສົນໃຈ ຢາກ ຮຽນ ພາສາ ຫວຽດນາມ ບໍ່ ?

໕. ເຈົ້າ ມີ ໝູ່ ຄູ່ ຄົນ ຂແມນ ຈັກ ຄົນ ?

ບົດຮຽນ ທີ ໙

# ເຂດແຂວງດິນລາວ

Lesson 9

## OLD AND NEW LAOTIAN PROVINCES




# ພຣະຣາຊອານາຈັກລາວ

ເຂດແຂວງ

ໃນສມັຍ

໑໙໗໕

ກ່ອນການ

ປັ້ນປ່ຽນ

ອຳນາດປົກຄອງ

# ພຣະຣາຊອານາຈັກລາວ

໑. ແຂວງ ນ້ຳທາ
໒. ແຂວງ ຜົ້ງສາລີ
໓. ແຂວງ ໄຊຍະບຸຣີ
໔. ແຂວງ ຫລວງພຣະບາງ
໕. ແຂວງ ຊຳເໜືອ
໖. ແຂວງ ວຽງຈັນ
໗. ແຂວງ ຊຽງຂວາງ
໘. ແຂວງ ບໍຣິຄັນ
໙. ແຂວງ ຄຳມ່ວນ
໑໐. ແຂວງ ສວັນນະເຂດ
໑໑. ແຂວງ ວາປີຄຳທອງ
໑໒. ແຂວງ ສາຣະວັນ
໑໓. ແຂວງ ຈຳປາສັກ
໑໔. ແຂວງ ເຊໂດນ
໑໕. ແຂວງ ອັຕປື
໑໖. ແຂວງ ສີທັນດອນ

# ເຂດປົກຄອງໃໝ່

໑. ແຂວງຜົ້ງສາລີ
໒. ແຂວງຫລວງນ້ຳທາ
໓. ແຂວງບໍ່ແກ້ວ
໔. ແຂວງອຸດົມໄຊ
໕. ແຂວງໄຊຍະບຸຣີ
໖. ແຂວງຫລວງພຣະບາງ
໗. ແຂວງຫົວພັນ
໘. ແຂວງຊຽງຂວາງ
໙. ແຂວງວຽງຈັນ
໑໐. ແຂວງບໍຣິຄັນໄຊ
໑໑. ແຂວງຄຳມ່ວນ
໑໒. ແຂວງສວັນນະເຂດ
໑໓. ແຂວງສາຣະວັນ
໑໔. ແຂວງເຊກອງ
໑໕. ແຂວງຈຳປາສັກ
໑໖. ແຂວງອັຕປື




# ປະເທດ ລາວ

## ພາຍໃຕ້ ການ ປົກຄອງ ໃຫມ່

## ໑໙໗໕

# ຄຳຖາມ

໑. ຄອບຄົວຂອງເຈົ້າ ມາຈາກແຂວງໃດ? ຍາພໍ່ຍາແມ່ ຂອງເຈົ້າ ນັ້ນ ເພິ່ນ ເກີດໃນ ເຂດ ແຂວງ ດຽວກັນບໍ?

໒. ເຈົ້າ ເຄີຍໄດ້ໄປ ຢ້ຽມ ຢາມ ພີ່ ນ້ອງ ຢູ່ ແຂວງໃດແດ່?

໓. ປະເທດລາວ ພາກ ເໜືອ ແລະ ພາກໃຕ້ ມີຫຍັງ ຄືກັນ ແລະມີ ຫຍັງ ແຕກ ຕ່າງ ກັນ ພໍ ປະມານ?

໔. ຄຳ ວ່າ " ໄທ ພວນ " ນີ້ ໝາຍ ເຖິງ ເຜົ່າໃດ, ພວກ ເຂົາ ເຈົ້າ ປາກ ພາສາ ຫຍັງ ແລະ ຢູ່ ແຂວງໃດ ແດ່?

໕. ແຂວງ ຕັ້ງໃໝ່ ມີ ຈັກ ແຂວງ ແລະ ປ່ຽນ ຊື່ວ່າ ແນວໃດ?

ບົດຮຽນທີ ໑໐

# ໝູ່ນັກຮຽນດຽວກັນຂອງຂ້ອຍ

Lesson 10

## MY FRIENDS FROM SCHOOL

# ໝູ່ ນັກ ຮຽນ ດຽວ ກັນ ຂອງ ຂ້ອຍ

ຢູ່ ໂຮງ ຮຽນ ຂອງ ຂ້ອຍ ມີ ນັກ ຮຽນ ໗໕໐ ຄົນ. ພວກ ນັກ ຮຽນ ມາ ຈາກ ຫລາຍ ປະ ເທດ ແລະ ປາກ ຫລາຍ ພາ ສາ.

ນັກ ຮຽນ ຈຳ ນວນ ນຶ່ງ ມາ ຈາກ ປະ ເທດ ລາວ, ຈຳ ນວນ ນຶ່ງ ມາ ຈາກ ປະ ເທດ ກັມ ພູ ຊາ, ຈຳ ນວນ ນຶ່ງ ມາ ຈາກ ປະ ເທດ ຫວຽດ ນາມ ແລະ ອີກ ຈຳ ນວນ ນຶ່ງ ເຊິ່ງ ເປັນ ຈຳ ນວນ ໃຫຍ່ ກວ່າ ໝູ່ ນັ້ນ ມາ ຈາກ ປະ ເທດ

ເມັກຊິໂກ. ນອກຈາກນັ້ນແລ້ວ ຍັງມີພວກນັກຮຽນອີກຈຳນວນນຶ່ງ ເຊິ່ງເປັນຈຳນວນ ໜ້ອຍ ທີ່ເປັນ ຄົນອະເມຣິກັນ ເອງ.

ຢູ່ໂຮງຮຽນ ຂອງ ພວກ ຂ້ອຍ ດັ່ງກ່າວ, ພວກນັກຮຽນ ປາກ ຫລາຍ ພາສາ ແຕ່ກໍ ພາກັນ ພາກພຽນຮຽນ ພາສາອັງກິດ ໝົດທຸກ ຄົນ. ຂ້ອຍ ມັກ ຟັງພາສາ ຕ່າງປະເທດ. ຂ້ອຍ ເຊື່ອວ່າ ຮູ້ ຫລາຍ ພາສາ ເທົ່າໃດ ຄົງເປັນ ປໂຍດ ແກ່ຄົນເຮົາ ຫລາຍຂຶ້ນ.

ໝວດ ນັກ ຮຽນ ທີ່ ມາຈາກ ປະເທດ ເມັກຊິໂກ ປາກ ພາສາ ສະເປນ. ພາສາ ສະເປນ ຫລືວ່າ ພາສາ "ແອສປາໂຍລ" ນີ້ ເປັນ ພາສາ ນຶ່ງ ທີ່ ສຳຄັນທີ່ສຸດ ຢູ່ໃນໂລກ. ພາສາ ສະເປນ ແລະ ພາສາ ຝຣັ່ງ ມີ ສຳນຽງ ພ້ອມ ດ້ວຍ ຫລາຍ ຄຳສັບ ຄ້າຍ ຄຽງກັນ.

ໝວດ ນັກ ຮຽນ ທີ່ ມາຈາກ ປະເທດ ກັມພູຊາ ປາກ ພາສາ ຂເມນ. ຄົນ ຂເມນ ເອງ ເອີ້ນ ພາສາ ຂອງ ຕົນ ເປັນ ພາສາ "ຂະແມ" ແລະ ຮຽກ ຊື່

# ໝູ່ ຄູ່ ຂອງ ຂ້ອຍ
# ມາຈາກ
# ປະເທດ ເມັກຊິໂກ
# ເປັນສ່ວນໃຫຍ່



ປະເທດ ຂອງຕົນ ວ່າ " ກັມປູເຈັງ " . ບາງຄົນທີ່ມາ ຈາກປະເທດ ກັມພູຊາ ກໍ່ປາກ ພາສາຈາມ. ພາສາ ຈາມນີ້ ເປັນ ພາສາ ຂອງ ຊາວ ຈາມ ທີ່ສືບເນື່ອງກັນ ມາ ແຕ່ ສມັຍ " ນະຄອນຈໍາປາ " ພຸ້ນ.

ພວກທີ່ ມາຈາກ ປະເທດ ຫວຽດນາມ ປາກ ພາສາ ຫວຽດນາມ . ພາສາ ຫວຽດນາມນີ້, ເຖິງ ຈະໃຊ້ ໂຕອັກສອນ ພາສາໂຣມັນ ກໍ່ຈິງ, ມີສ່ວນ ພົວພັນ ພິເສດ ນໍາພາສາຈີນ ແລະໄດ້ ເອົາຄໍາ



ໝູ່ ຄູ່ ຂອງຂ້ອຍ ຈຳ ນວນ ນຶ່ງ ມາຈາກ ອິນດູຈີນ

ສັບຈີນ ຫລາຍ ໝື່ນ ຄຳ ເຂົ້າ ເປັນ ສ່ວນ ປະກອບ ອັນສຳ
ຄັນ ຕລອດ ມາ . ຊາວ ຫວຽດ ນາມ ຈຳ ນວນ ນຶ່ງ ປາກ
ພາສາຈີນໄດ້ ເພາະວ່າ ເຂົາ ເຈົ້າ ມາ ຈາກ ເຊື້ອ ຊາດ ຈີນ.

ຂ້ອຍ ເອງ ແລະ ໝູ່ ຄູ່ ຈຳ ນວນ ນຶ່ງ ມາ ຈາກ ປະ
ເທດ ລາວ . ຂ້ອຍ ປາກ ພາສາ ລາວ . ໝູ່ ເພື່ອນ ຈຳ
ນວນ ນຶ່ງ ປາກ ພາສາ ນີ້ . ມີ ອ້າຍ ນ້ອງ ສອງ ຄົນ
ປາກ ພາສາ ມ້ຽນ ແລະ ມີ ອີກ ໔ ຄົນ ປາກ ພາ
ສາ ຂະມຸ . ພວກ ຂ້ອຍ ຮັກ ແພງ ກັນ ສເມີ .




ຂ້ອຍ ເອງ ມາ ຈາກ ປະເທດ ລາວ

# ຄຳຖາມ

໑. ໂຮງຮຽນຂອງເຈົ້າ ມີນັກຮຽນ ຫລາຍປານໃດ ແລະປະກອບດ້ວຍ ຈັກຊາດ, ຈັກພາສາ ?

໒. ເຈົ້າ ຄິດວ່າ ເປັນຫຍັງ ພວກນັກຮຽນ ຫວຽດນາມ ຈຶ່ງສາມາດ ຮຽນພາສາອັງກິດ ມາຕາຖານໄດ້ ຢ່າງໄວວາ ?

໓. ເຈົ້າ ເຄີຍໄດ້ ຖືກເຊີນໄປ ທ່ຽວ ຢາມ ເຮືອນ ຂອງ ເພື່ອນນັກຮຽນຕ່າງຊາດແດ່ບໍ ? ເຈົ້າ ເອງ ເຄີຍ ເຊີນ ເຂົາ ເຈົ້າ ບໍ ?

໔. ເຈົ້າ ສົນໃຈ ນຳ ຄວາມ ຮັບ ຜິດ ຊອບ ຕໍ່ສັງຄົມ ບໍ ?

໕. ເຈົ້າ ຄິດແນວໃດ ກ່ຽວ ກັບ ຄົນ ທີ່ ມີ ນິໄສ ຂົ່ມເພິ່ນ ຍໍໂຕ?

ບົດຮຽນ ທີ ໑໑

# ນາງ ຮວາ ແລະ ທ້າວດວ່ານ

Lesson 11

## HOA AND DOAN

# ນາງ ຮວາ ແລະ ທ້າວດ່ານ

ນາງ ຮວາ ແລະ ທ້າວ ດ່ານ ຮຽນຢູ່ຫ້ອງດຽວກັນ ກັບ ຂ້ອຍ. ໝູ່ ຄູ່ ຂອງ ຂ້ອຍ ສອງ ຄົນ ນີ້ ມາຈາກ ປະເທດ ຫວຽດນາມ. ເຂົາ ເຈົ້າ ມີ ໜ້າ ຕາ ຄ້າຍຄຽງ ກັນ ແຕ່ ກໍ່ ບໍ່ ແມ່ນ ເປັນ ອ້າຍ ເປັນ ນ້ອງ ກັນ. ນາງ ຮວາ ມາ ຈາກ ຕະກຸນ " ເຈິ່ນ ". ຊື່ ເຕັມ ຂອງ ລາວ ຮຽກວ່າ ເຈິ່ນທິຮວາ. ຄອບຄົວ ຂອງ ນາງ ຮວາ ມາ ຈາກ ພາກໃຕ້ ຂອງ ປະເທດ ຫວຽດນາມ. ສ່ວນ

ສ່ວນ ຄອບຄົວ ຂອງ ທ້າວ ດ່ວນ ນັ້ນໄດ້ ເປັນ ອົພຍົບ ສອງ ເທື່ອ. ເທື່ອ ທຳ ອິດ ແມ່ນໄດ້ ໜີ ຈາກ ຫວຽດ ນາມ ເໜືອ ໄປ ຢູ່ ຫວຽດ ນາມ ໃຕ້ ໃນ ປີ ໑໙໕໔. ເທື່ອ ທີ່ ສອງ ແມ່ນ ເທື່ອ ໜີ ເຂົ້າ ມາ ຂໍ ລີ້ ພັຍ ໃນ ສະຫະຣັດ ອະເມຣິກາ ນີ້ ເອງ. ທ້າວ ດ່ວນ ມາ ຈາກ ຕະກຸນ " ເລ ". ຊື່ ເຕັມ ຂອງ ລາວ ອ່ານວ່າ ເລ ວັນ ດ່ວນ .

ໜຸ່ມ ຄູ່ ຫວຽດ ນາມ ສອງ ຄົນ ນີ້ ເປັນ ນັກຮຽນ

ຕົວຢ່າງ . ເຂົາເຈົ້າ ຮຽນ ໜັງສື ເກັ່ງ ຫລາຍ, ເກັ່ງ
ທັງເຮັດເລກ , ເກັ່ງໃນການອ່ານ ແລະ ຂຽນ ພາສາ
ອັງກິດ , ເກັ່ງ ທັງ ວິຊາ ວິທຍາສາດ. ເຂົາເຈົ້າ ບໍ່ ຖື
ຕົວ , ບໍ່ ອວດ ອົ່ງ ແລະ ບໍ່ ຍອມ ໃຊ້ ພາສາ ຕ່ຳຕ້ອຍ
ຫລື ສົບ ຫຍາບ ຊ້າ ເປັນ ອັນຂາດ. ເຂົາເຈົ້າໄດ້ ຮັບ
ຄຳ ຍ້ອງຍໍ ສັນລະເສີນ ຈາກ ທ່ານ ຄູ ແລະ ບັນດາ
ອາຈານ ຢູ່ ເລື້ອຍໆ.

ນາງ ຮວາ ແລະ ທ້າວ ດວ່ານ ມາ ຮອດ ສະຫະຣັດ

B4 The Orange County Register Sunday, July 7, 1985

# THE BEST OF '85



**Thanh-Van Ngoc Nguyen**
Saddleback High School, Santa Ana
Speech-debate team, student congress, CSF, French Club, Vietnamese Club, Girl's League, math team, tennis, mock trial
Plans: Stanford University; biology
**"Read, read, read! Try to do as much homework as possible. Meet people and learn to make others feel good about themselves."**



**Anh Tuan Le**
Valencia High School, Placentia
Tennis, NHS, CSF, Computer Club, Academic Decathlon
Plans: California Institute of Technology; nuclear engineering
**"Aim for your highest potential in academics, but don't forget to get involved in other activities."**



**David Nguyen**
Ocean View High School, Huntington Beach
Spanish Club, Key Club, CSF, Math Club, tennis
Plans: UC Irvine; biology
**"Take every challenging class possible. Join as many school activities as possible, and help society through community service."**

ຄວາມບາກບັ່ນ ພະຍາຍາມ ແລະ ຄວາມ
ສາມາດ ຂອງ ບັນດານັກ ຮຽນ ຫວຽດນາມ

ອະເມຣິກາໄດ້ ຫລາຍປີແລ້ວ ແຕ່ກໍ່ຍັງບໍ່ລືມພາ
ສາ ຫວຽດນາມ. ທຸກໆ ວັນເສົາ ຕອນເຊົ້າ ຮວາ
ແລະ ດວ່ານ ຍັງ ຕ້ອງ ເຂົ້າ ຮຽນ ພາສາ ຫວຽດນາມ
ແລະ ຄົ້ນ ຄວ້າ ວັທນະທັມ ຫວຽດນາມ ຕື່ມອີກ.
ຂ້ອຍ ພໍໃຈ ຫລາຍ ທີ່ ເຫັນ ຄົນ ເອເຊັຍ ນັບຖື ພາສາ
ແລະ ວັທນະທັມ ອັນດີງາມ ຂອງຕົນ ເພາະວ່າ ຂ້ອຍ
ເອງ ກໍ່ ນັບຖື ຮີດຄອງ ປະເພນີ ອັນດີງາມ ຂອງ ເຊື້ອ
ຊາດ ຊາວລາວ ແລະ ກໍາລັງ ຮຽນ ພາສາລາວ ນໍາ ພໍ່

ຊາວຫວຽດນາມ

ເປັນ

ຊາດນຶ່ງ

ທີ່ມີ ປວັດສາດ

ແລະ ວັທນະທັມ

ອັນເກົ່າແກ່

ມາແຕ່ ເດິກດຳບັນ

ໃນແຫລມ ອິນດູຈີນ



ແມ່ ຂອງ ຂ້ອຍ . ພໍ່ ແມ່ ຂອງ ຂ້ອຍ ຮັກ ແພງ ຮວາ ແລະ ດ່ວານ ຫລາຍ ແລະ ດີໃຈ ວ່າ ຂ້ອຍ ມີ ໝູ່ ຄູ່ ປະເສີດ.

ຂ້ອຍ ມັກ ໂທ ຣະ ສັບ ໄປ ລົມ ກັບ ຮວາ ແລະ ດ່ວານ ເລື້ອຍ ໆ. ບາງ ມື້ ດ່ວານ ກໍ ມາ ຫລິ້ນ ນຳ ຂ້ອຍ ຢູ່ ເຮືອນ. ຂ້ອຍ ສັງ ເກດ ເຫັນ ວ່າ ດ່ວານ ມັກ ກິນ ລາບ ແລະ ມັກ ເຂົ້າ ໜຽວ ຄື ຂ້ອຍ . ດ່ວານ ມີ ຄວາມ ລົມ ຫລາຍ ເພາະ ວ່າ ລາວ ອ່ານ ປື້ມ ຫລາຍ ທີ່ ສຸດ .

# ປະເທດຫວຽດນາມ





# ຄຳຖາມ

໑. ການທີ່ ພໍ່ແມ່ ສົ່ງ ລູກ ເຂົ້າ ຮຽນ ພາສາ ຫວຽດນາມ ທຸກໆວັນ ເສົາ ນັ້ນ ມີ ຄວາມ ໝາຍ ຫຍັງ ແດ່ ສຳລັບ ປະເທດຊາດ ອະເມຣິກັນ ແລະ ສຳລັບ ປະຊາ ຄົມ ຫວຽດນາມ ອະເມຣິກັນ ເອງ ?

໒. ເຈົ້າ ຄິດວ່າ ຍ້ອນ ຫຍັງ ຈຶ່ງ ມີ ໜັງສື ພິມ ຫວຽດນາມ ແລະ ປຶ້ມ ມາຕຖານ ເປັນ ພາສາ ຫວຽດນາມ ຢູ່ ຮ້ານ ຄ້າ ຕ່າງ ໆ ຢ່າງ ຫລວງ ຫລາຍ ?

໓. ເຈົ້າ ຮູ້ ສຶກ ແນວໃດ ທີ່ ເຫັນ ພໍ່ ແມ່ ຊາວ ຫວຽດນາມ ເຄັ່ງ ຄັດ ຕໍ່ ຜົນ ງານ ການ ສຶກ ສາ ຂອງ ລູກ ຫລານ ຕົນ ຢູ່ ບໍ່ ເຊົາ ?

ບົດຮຽນ ທີ ໑໒

# ຂ້ອຍຕ້ອງເກ່ງພາສາອັງກິດ

Lesson 12

## I MUST PERFECT MY ENGLISH

# ຂ້ອຍ ຕ້ອງ ເກ່ງ ພາສາ ອັງກິດ

ຄອບ ຄົວ ຂອງ ຂ້ອຍ ອົພຍົບ ເຂົ້າ ມາ ຢູ່ ສະຫະຣັດ ອະເມຣິກາ ໄດ້ ໑໐ ປີ ພໍ ດີ. ເມື່ອ ມາ ຮອດ ໃໝ່ໆ, ພວກ ຂ້ອຍ ຮູ້ ສຶກ ອຸກ ອັ່ງ ແລະ ຍາກ ໃຈ ພໍ ສົມ ຄວນ. ພວກ ຂ້ອຍ ໄດ້ ພາ ກັນ ຢູ່ ແຕ່ ເຮືອນ ແລະ ບໍ່ ກ້າ ໄປ ໄກ ຈາກ ຄຸ້ມ ຕົນ ເລີຽ. ຈະ ໄປ ໃສ ມາ ໃສ ທາງ ໄກ ໜ້ອຍ ນຶ່ງ ກໍ່ ຍາກ. ຈະ ປາກ ຈະ ເວົ້າ ນຳ ໃຜ ກໍ່ ລຳ ບາກ. ອຸປສັກ ອັນ ສຳ ຄັນ ກ່ວາ ໝູ່ ໃນ ເວລາ

ນັ້ນ ຄົງໄດ້ ແກ່ ບັນ ຫາ ທີ່ ພວກ ຂ້ອຍ ເອງ ພາຍໃນ
ຄອບ ຄົວ ບໍ່ ຮູ້ ພາ ສາ ອັງ ກິດ ດີ ຈັກ ຄົນ . ແມ້ ແຕ່ ວ່າ
ຢາກ ໄດ້ ສິ່ງ ງ່າຍ ໆ ກໍ ຕ້ອງ ໃຊ້ ເວ ລາ ຢ່າງ ຫລວງ
ຫລາຍ ແລະ ຕ້ອງ ໄດ້ ລົບ ກວນ ເພື່ອນ ບ້ານ ໃກ້
ຄຽງ ຫລື ເພິ່ງ ພາ ອາ ສັຍ ຄົນ ອື່ນ ຢູ່ ເລີຍ ໆ .

ດັ່ງ ນັ້ນ ເອງ , ເມື່ອ ຂ້ອຍ ໄດ້ ຍ່າງ ເຂົ້າ ໂຮງ ຮຽນ
ອະ ເມ ຣິ ກັນ ເທື່ອ ທຳ ອິດ ໃນ ປີ ໑໙໗໘ , ຂ້ອຍ ຈຶ່ງ
ໄດ້ ປະ ຕິ ຍານ ຕໍ່ ຕົນ ເອງ ວ່າ ຂ້ອຍ ຈະ ຕັ້ງ ໃຈ ຮຽນ

ພາສາອັງກິດ ໃຫ້ ສາມາດອ່ານ ແລະ ເຂົ້າໃຈໄວ ທີ່ສຸດ. ຂ້ອຍໄດ້ຕັ້ງໃຈ ຟັງ ນາຍຄູ ພາສາອັງກິດ ຢ່າງ ບໍ່ ທໍ້ຖອຍ. ຂ້ອຍໄດ້ ພະຍາຍາມ ຊອກ ຫລິ້ນ ນຳ ໝູ່ ຄູ່ ທັງຫລາຍ ເພື່ອ ສະແຫວງ ຫາໂອກາດ ເວົ້າຈາ ພາສາ ອັງກິດໃຫ້ ລ່ຽນ ລອຍ ແລະ ຂ້ອຍຍັງ ໄດ້ ຢືມ ປຶ້ມໄປ ອ່ານ ຢູ່ ເຮືອນ ຕື່ມ ອີກ. ຕອນໃດ ທີ່ ຂ້ອຍ ມັກ ຫລາຍ ຫລື ມີ ຄວາມ ເວົ້າ ມ່ວນ ທີ່ ຄ່ອງ ຫູ ພິເສດ ນັ້ນ ຂ້ອຍ ກໍ່ ຈົດສາ ກ່າຍ ເອົາໄວ້. ບາງ

ຂ້ອຍເອົາໃຈໃສ່
ໃນການຮຽນ
ພາສາອັງກິດ



ເທື່ອ ຂ້ອຍ ກໍ ອ່ານໄປ ອ່ານ ມາ ຈົນ ຈື່ ສຳ ນວນ ຄວາມ ເວົ້າ ທີ່ ຂ້ອຍ ມັກ ນັ້ນໄດ້ ກັບ ປາກ .

ຖ້າ ຂ້ອຍ ບໍ່ ເກ່ງ ພາ ສາ ອັງ ກິດ, ເຮັດ ແນວໃດ ຂ້ອຍ ຈຶ່ງ ຈະ ຊ່ອຍ ແປ ຄວາມ ໃຫ້ ພໍ່ ແມ່ ພີ່ ນ້ອງ ຂອງ ຂ້ອຍໄດ້ ?, ເຮັດ ແນວໃດ ຂ້ອຍ ຈຶ່ງ ຈະ ສຳ ເຣັດ ການ ສຶກ ສາ ຊັ້ນ ສູງ ທີ່ ຂ້ອຍ ຕ້ອງ ການ ?, ແລະ ເຮັດ ແນວໃດ ຂ້ອຍ ຈຶ່ງ ຈະ ມີ ໝູ່ ຄູ່ ແລະ ສາ ມາດ ເຂົ້າ ສັງ ຄົມ ອະ ເມ ຣິ ກັນໄດ້ ?

ການ
ຮຽນ
ພາສາ
ຕ້ອງເຄັ່ງຄັດ
ໃນການ
ຟັງ, ອ່ານ,
ຂຽນ ແລະປາກ



# ຄຳຖາມ

໑. ພາສາອັງກິດ ມີຄວາມ ສຳຄັນ ໜ້ອຍ ຫລາຍ ພຽງໃດສຳລັບ ການດຳຣົງຊີວິດ ຂອງ ຄອບຄົວເຈົ້າ ?

໒. ເຈົ້າ ຄິດວ່າ ຍ້ອນ ຫຍັງ ປະຊາຊົນ ທົ່ວໂລກ ຈຶ່ງ ນິຍົມຮຽນ ພາສາອັງກິດ ຫລາຍ ຂຶ້ນ ເລີ້ຍ ໆ ?

໓. ເຈົ້າໄດ້ສັງເກດ ເຫັນບໍ່ວ່າ ຄົນອະເມຣິກັນ ສ່ວນຫລາຍບໍ່ ຄ່ອຍໄດ້ ພາສາ ຕ່າງປະເທດ , ເຈົ້າ ຄິດວ່າ ຊາວໜຸ່ມອະເມຣິກັນ ຄວນ ຫລື ບໍ່ຄວນ ສົນໃຈ ຮຽນ ພາສາ ຕ່າງປະເທດ ?

໔. ນອກຈາກ ພາສາອັງກິດ ແລ້ວ ເຈົ້າ ຢາກຮູ້ ພາສາ ຫຍັງຕື່ມ ?

ບົດຮຽນ ທີ ໑໓

# ເພື່ອນ ຂເໝນ ຂອງ ຂ້ອຍ ຄົນ ນຶ່ງ

Lesson 13

## ONE OF MY CAMBODIAN FRIENDS

# ເພື່ອນ ຂະເມນ ຂອງ ຂ້ອຍ ຄົນ ນຶ່ງ

ທ້າວ ເອັງ ອຳມະໂຣ ເປັນ ໜຸ່ມ ເພື່ອນ ຂອງ ຂ້ອຍ ຄົນ ນຶ່ງ ທີ່ ຂ້ອຍ ຮັກ ແພງ ແລະ ນັບ ຖື ຫລາຍ ທີ່ ສຸດ. " ເອັງ " ແມ່ນ ນາມ ສະ ກຸນ ຂອງ ລາວ , " ອຳມະໂຣ " ແມ່ນ ຊື່. ຄອບ ຄົວ ຂອງ ອຳ ມາໂຣ ມາ ຈາກ ປະເທດ ກັມພູ ຊາ. ອຳມະໂຣ ເປັນ ຄົນ ຂະເມນ. ໃນ ປະເພ ນີ ຂະເມນ, ດັ່ງ ດຽວ ກັນ ກັບ ປະເພ ນີ ຈີນ ແລະ ຫວຽດ ນາມ ຫລື ມົ້ງ, ນາມ ສະ ກຸນ ຕ້ອງ ອອກ ນຳ ໜ້າ ຊື່.



ຄວາມ
ທຸກທໍຣະມານ
ຂອງ
ຄອບຄົວ
ອົພຍົບຂເມນ
ຄອບຄົວນຶ່ງທີ່
ຍັງຄ້າງຄາຢູ່ສູນດົບໄກ

ບາດມາຮອດ ສະຫະຣັດ ແລ້ວ, ທ້າວ ເອັງ ອຳມະໂຣ ກໍ່ ກາຍມາເປັນ ທ້າວ ອຳມະໂຣ ເອັງ ເພື່ອຄວາມ ສະດວກ ສະບາຍ ໃນ ດ້ານ ເອກສານ ທາງ ການ.

ອຳມະໂຣ ເປັນລູກ ກຳພ້າ. ລາວບໍ່ມີ ພໍ່. ຍາພໍ່ ຂອງ ອຳມະໂຣໄດ້ ເສັຽຊີວິດໄປແລ້ວ. ປັດຈຸບັນນີ້ ອຳມະໂຣ ຢູ່ ນຳ ແມ່ ແລະ ນ້ອງ ສອງຄົນ. ນ້ອງສາວ, ອາຍຸ ໗ ປີ, ມີຊື່ວ່າ ໂສພຽບ. ສະເຣີນ ຜູ້ ເປັນນ້ອງ ຊາຍ ຫາກໍ່ມີ ອາຍຸໄດ້ ໕ ປີ. ຄອບຄົວ ຂອງ ອຳ

# ປະເທດ ກັມພູຊາ



ມະໂຣ ໄດ້ ໜີ ເຂົ້າ ມາ ສະຫະຣັດ ອະເມຣິກາ ໃນປີ ໑໙໗໐, ແປວ່າ ມາລຸນ ຫລັງ ຄອບຄົວ ຂອງຂ້ອຍ ໔ ປີ.

ຂ້ອຍ ມັກໄປ ຫລິ້ນ ນຳ ອຳມະໂຣ ເລື້ອຍໆ. ລາວ ເປັນ ເພື່ອນ ທີ່ ດີ ທີ່ ສຸດ. ລາວ ເປັນ ຄົນ ບໍ່ມັກ ຄຽດ ງ່າຍ. ລາວ ບໍ່ ໃຈ ນ້ອຍ. ລາວ ເປັນ ຄົນ ດຸ ໝັ່ນ ແລະ ຮຽນ ເກ່ງ ຫລາຍ. ລາວ ຮັກ ນ້ອງ ຂອງ ລາວ ອີ ຫລີ ແລະ ສອນ ໜັງສື ໃຫ້ ທັງ ສອງ ຄົນ ທຸກໆ ມື້. ກ່ອນ ອື່ນ ໝົດ, ລາວ ຮັກ ແລະ ນັບ ຖື ແມ່ ຂອງລາວ ແທ້ໆ.

## ອັງກໍວັດ



ຊາວຂະເມນ ເປັນຊົນຊາດ ທີ່ ມີ ສິລປະວັທນະທັມ ລະດັບໂລກ. ສາສນາ ພຸດໃນດິນລາວ ແລະ ຮີດຄອງ ປະເພນີ ລາວ ຫລາຍອັນ ກໍໄດ້ແຜ່ໄປຈາກຂະເມນ.

# ຄຳຖາມ

໑. ເຈົ້າ ເຄີຍໄດ້ຍິນ ຫຍັງ ແດ່ ກ່ຽວ ກັບ ຄວາມທຸກທໍຣະມານຂອງ ຊາວ ຂເມນ ຫລັງ ຈາກ ປີ ໑໙໗໕ ?

໒. ປະເທດລາວເຮົາ ແລະ ປະເທດ ກັມພູຊາ ເຄີຍ ເຊື່ອມ ຄວາມ ສີວິລັຍ ກັນ ມາ ແຕ່ ກ່ອນ ໆ ; ເຈົ້າ ຮູ້ ບໍ່ ແມ່ນໃນສມັຍໃດ ຂອງ ປະວັດ ສາດ ລາວ ?

໓. ຢູ່ ປະເທດ ກັມພູຊາ ມີ ແມ່ ນ້ຳ ແປກ ປລາດ ສາຍນຶ່ງ ທີ່ ໄຫລ ປ່ຽນ ທິດ ປີລະ ສອງ ເທື່ອ ; ແມ່ ນ້ຳ ນັ້ນ ຊື່ ຫຍັງ ?

໔. ຊື່ ດິນ ລາວ ແລະ ຊື່ ດິນ ຂເມນ ຕ່າງ ກັນ ຢູ່ ບ່ອນ ໃດ ?

ບົດຮຽນ ທີ ໑໔

# ລີເຊັ້ງ ສົນໃຈ ພາສາສະເປນ

Lesson 14

## LY SENG IS LEARNING SPANISH

# ລີເຊັ້ງ ສົນໃຈພາສາສະເປນ

ທ້າວ ລີເຊັ້ງ ເປັນ ຄົນລາວເຜົ່າມົ້ງ ຫລືວ່າ ຈະ ຮຽກເປັນ "ມົ້ງລາວ" ກໍ່ວ່າໄດ້ ເນື່ອງຈາກເຫດ ທີ່ ຄອບ ຄົວ ຂອງ ລີເຊັ້ງ ເຄີຍ ທຳ ມາ ຫາກິນ ຢູ່ ປະເທດລາວ ມາ ແລ້ວ. ເຜົ່າ ມົ້ງ ເປັນ ເຜົ່າ ທີ່ ມີ ເຊື້ອ ສາຍ ຢາຍ ຢູ່ ຫລາຍ ປະເທດ ໃນ ພາກ ພື້ນ ເອເຊັຍ ຕາ ເວັ້ນ ອອກ ສ່ຽງໃຕ້. ດັ່ງນັ້ນ ເອງ ຈຶ່ງມີ ມົ້ງລາວ, ມົ້ງໄທ, ມົ້ງຫວຽດ,

ນັ້ງ ພະ ມາ  ແລະ ນັ້ງ ຈີນ .

ຂ້ອຍ ແລະ ລີ ເຊົ້ງ ໄດ້ ຮູ້ ແລະ ຮັກ ແພງ ກັນ ມາ ແຕ່ ຍັງ ນ້ອຍ ພຸ້ນ .  ຄອບ ຄົວ ຂອງ ລີ ເຊົ້ງ ແລະ ຄອບ ຄົວ ຂອງ ຂ້ອຍ ມາ ຈາກ ແຂວງ ຊຽງ ຂວາງ . ຫລັງ ຈາກ ໄດ້ ອົພ ຍົບ ມາ ຢູ່ ຄຸ້ມ ນາໄຮ່ ດຽວ ທີ່ ນະ ຄອນ ວຽງ ຈັນ ,  ຍາ ພໍ່ ຂອງ ລີ ເຊົ້ງ ກໍ່ ໄດ້ ແຮກ ສ່ຽວ ນຳ ຍາ ພໍ່ ຂອງ ຂ້ອຍ .  ຕັ້ງ ແຕ່ ນັ້ນ ຕໍ່ ມາ , ຂ້ອຍ ແລະ ອ້າຍ ນ້ອງ ທັງ ໝົດ ພາຍ ໃນ ຄອບ

ຄືວ ກໍ ເອີ້ນ ເພິ່ນ ເປັນ " ພໍ່ ສ່ຽວ ". ພໍ່ ສ່ຽວ ແມ່ ສ່ຽວ ຂອງ ຂ້ອຍ ເປັນ ຄົນ ດຸ ໝັ່ນ, ສລາດ ສລຽວ ແລະ ຊື່ ສັດ ທີ່ ສຸດ.

ຂ້ອຍ ແລະ ລີ ເຈັ້ງ ມີ ໂຊກ ຊາ ຕາ ດີ ແທ້ ໆ ເພາະ ວ່າ ພວກ ຂ້ອຍ ມີ ພໍ່ ແມ່ ເປັນ ຄົນ ຮອບ ຄອບ ແລະ ເຫັນ ໄກ ຢ່າງ ຂນາດ. ເມື່ອ ມາ ຮອດ ກາ ລີ ຟໍ ເນັຽ ແລ້ວ ບັນ ດາ ພໍ່ ແມ່ ຂອງ ພວກ ຂ້ອຍ ກໍ ພ້ອມ ກັນ ວາງ ແຜນ ໃຫ້ ລີ ເຈັ້ງ ແລະ



ຊາວມົ້ງລາວ
ເປັນເຜົ່າໃຫຍ່
ແລະ ເຄີຍມີ
ຊື່ສຽງທາງດີ
ມາຫລາຍ
ໃນປະເທດລາວ

ຂ້ອຍໄດ້ ເຂົ້າໂຮງ ຮຽນ ດຽວກັນ .

ລີເຊົ້າ ຄຶດ ຢາກເປັນ ນັກ ວິສະວະກອນ ໃນ ອະນາຄົດ . ລາວ ຕັ້ງໃຈ ຮຽນ ວິຊາ ເລກ ແລະ ວິຊາ ວິທຍາສາດໂດຍ ສະເພາະ . ລາວ ເກັ່ງ ພາສາອັງກິດ ແລະ ມັກ ອ່ານ ປຶ້ມ ຫລາຍທີ່ ສຸດ .

ປັດຈຸບັນນີ້ , ພໍ່ ສັ່ງ ແນະນໍາ ໃຫ້ລີເຊົ້າ ຮຽນ ພາສາ ສະເປນ ເພີ່ມ ເຕີມ ທຸກໆ ມື້ ເພາະວ່າ ເພີ່ນ ເຫັນ ຄວາມ ສໍາຄັນ ຂອງ ພາສາ ດັ່ງກ່າວ .

໕. ແຂວງ ຊຳ ເຫນືອ
໗. ແຂວງ ຊຽງ ຂວາງ
໔. ແຂວງ ຫລວງ ພຣະບາງ
໓. ແຂວງ ໄຊຍະບຸຣີ




ດິນ ດອນ ຕ່ອນ ຫຍ້າ
ແຫ່ງ ກຳ ເນີດ ຂອງ
ຊາວ ມົ້ງ ລາວ ຈຳ ນວນ ນຶ່ງ

# ຄຳຖາມ

໑. ເຜົ່າມົ້ງລາວເຮົາຕີຄວາມໝາຍຂອງຄຳສັບທີ່ວ່າ "ແມ້ວ" ນັ້ນເປັນສັບຕ່ຳຕ້ອຍ ແລະມີເຈຕນາໝິ່ນປະໝາດຊາວມົ້ງໂດຍສະເພາະ ; ເຈົ້າມີບັນຫາເອີ້ນຄົນມົ້ງເປັນມົ້ງບໍ່ ?

໒. ເຈົ້າຄົງສັງເກດເຫັນແລ້ວວ່າ ຊົນເຜົ່າມົ້ງໃນປະເທດລາວສ່ວນຫລາຍບໍ່ສາມາດປາກ ຫລືຂຽນພາສາລາວ ; ຍ້ອນຫຍັງ?

໓. ເປັນຫຍັງບັນດາພໍ່ແມ່ພີ່ນ້ອງມົ້ງລາວທັງຫລາຍຈິ່ງຖືປະເທດລາວ ເປັນ "ບ້ານເກີດເມືອງນອນ" ຂອງຕົນ ?

໔. ເຈົ້າເຄີຍເຫັນຕົວອັກສອນມົ້ງ " ເຈົ້າຟ້າ " ແລ້ວບໍ່ ?

ບົດຮຽນ ທີ ໑໕

# ເອື້ອຍ ມາຣີຢາ ລູເຊໂຣ

Lesson 15

## SISTER MARIA LUCERO

# ເອື້ອຍ ມາຣີຢາ ລູເຊໂຣ

ນາງ ມາຣີຢາ ລູເຊໂຣ ເປັນ ເພື່ອນ ນັກຮຽນ ທີ່ ດີ ຄົນນຶ່ງ ຂອງ ເອື້ອຍ ຂ້ອຍ. ເອື້ອຍ ມາຣີຢາ ປາກໄດ້ ສອງ ພາສາ : ພາສາ ອັງກິດ ແລະ ພາສາ ສະເປນ. ລາວ ມາຈາກ ຄວ ຄວ ທີ່ ມີ ເຊື້ອ ຊາດ ເປັນ ຊາວ ເມັກ ຊິກ ກັນ. ຊື່ ເຕັມ ຂອງ ລາວ ຮຽກ ວ່າ ມາຣີ ຢາ ອານີຕາ ລູເຊໂຣ ໂຣດຣີແກສ. "ມາຣີຢາ" ແມ່ນ ຊື່ ກົກ, "ອານີຕາ" ແມ່ນ ຊື່ ກາງ,

" ລຸເຊໂຣ " ນັ້ນ ແມ່ນ ນາມສະກຸນ ທາງພໍ່, ແລະ "ໂຣດຣີແກສ" ກໍ ແມ່ນ ນາມສະກຸນທາງແມ່ຂອງ ເອື້ອຍ ມາຣີຢາ ເອງ.

ຄອບຄົວ ຂອງ ເອື້ອຍ ມາຣີຢາ ເປັນ ຄອບຄົວ ໃຫຍ່ ແລະ ມີຈິດໃຈ ກວ້າງ ຂວາງ ທີ່ສຸດ. ເວລາ ພວກຂ້ອຍ ມາ ຮອດ ເມືອງ ຊັນ ຕາ ອ້ານນາ ໃນ ປີທຳອິດນັ້ນ, ຄອບຄົວ ຂອງ ເອື້ອຍ ມາຣີຢາ ກໍ ເປັນ ຄອບຄົວ ນຶ່ງ ທີ່ໄດ້ ຊິດ ຊ່ວຍ ແລະ ໃຫ້

ຄວາມ ອົບ ອຸ່ນ ແກ່ ພວກ ຂ້ອຍ ຫລາຍ ປະການ. ໃນ ທີ່ ສຸດ, ພວກ ຂ້ອຍ ກໍໄດ້ ຮຽນ ຮູ້ ກ່ຽວ ກັບ ຄຸນຄ່າ ຂອງ ຮີດ ຄອງ ປະເພນີ ໃໝ່ ແລະ ເກີດ ມີ ຄວາມ ສົນ ໃຈ ຕໍ່ ວັທນະທັມ ຂອງ ຊາວ ອະເມຣິກັນ ເຊື້ອ ເມັກ ຊິກາກັນ ຍິ່ງ ຂຶ້ນ ເລື້ອຍ ໆ.

ເອື້ອຍ ມາຣີຢາ ເປັນ ນັກຮຽນ ດີ, ມີ ແນວ ຄິດ ເປີດ ເຜີຍ ແລະ ຮັກ ເດັກ ນ້ອຍ ຫລາຍ. ລາວ ມັກ ອ່ານ ປື້ມ ກ່ຽວ ກັບ ປະເພນີ ຂອງ ນາ ໆ ຊາດ,



ເອື້ອຍ ມາຣີຢາ ຮັກເດັກນ້ອຍຫລາຍ

ແລະ ກຳລັງ ສົນໃຈ ນຳ ພາສາ ຍີປຸ່ນ . ເອື້ອຍ ມາ
ຣີຢາ ເກ່ງທາງ ວິຊາ ເຄມີ ໂດຍສະເພາະ . ລາວຈະ
ໄດ້ ເຂົ້າ ມະຫາ ວິທຍາລັຍ ໃນ ມໍ່ໆ ນີ້ . ຈຸດປະສົງ
ຂອງ ລາວ ແມ່ນ ຕ້ອງ ສຳເຣັດ ການສຶກສາແພດ
ສາດ ເພື່ອໃຫ້ ເປັນ ແພດ ປົວ ເດັກ ໃນ ອະນາ
ຄົດ ອັນ ບໍ່ ນານ . ຂໍ ໃຫ້ ເອື້ອຍ ມາຣີຢາ ຈົງ ບັນ
ລຸ ຜົນ ແລະ ມີໂຊກດີ ຕລອດ ຊີວິດ !




# ປະເທດ ເມັກຊິໂກ

# ຄຳຖາມ

໑. ດ້ວຍ ເຫດໃດ ຊາວ ເມັກຊິກັນ ຈຶ່ງ ພາກັນ ເວົ້າ ພາສາ ສະເປນ ເຊິ່ງ ເປັນ ພາສາ ຂອງ ປະເທດ ສະເປນ ຕ່າງ ຫາກ ?

໒. ເປັນ ຫຍັງ ຊາວ ເມັກຊິກັນ ຈຶ່ງ ມີ ສອງ ຊື່ ແລະ ສອງ ນາມສະກຸນ ?

໓. ເປັນ ຫຍັງ ຄອບຄົວ ຂອງ ເອື້ອຍ ມາຣີຢາ ຈຶ່ງ ໃຫ້ ຄວາມ ອົບອຸ່ນ ແກ່ ຄອບ ຄົວ ອົບພະຍົບ ລາວ ?

໔. ຕາມ ຄວາມ ສັງເກດ ຂອງ ເຈົ້າ ເອງ ເຈົ້າ ເຫັນ ຄົນ ເມັກຊິກັນ ແລະ ຄົນ ລາວ ມີ ຫຍັງ ຄືກັນ ແລະ ມີ ຫຍັງ ແຕກຕ່າງກັນ ?

໕. ເຈົ້າ ເຂົ້າໃຈ ພາສາ ສະເປນ ໄດ້ ຫລາຍ ປານໃດ ແລ້ວ ?

# ບົດຮຽນ ທີ ໑໖

# ອົພຍົບອິນດູຈີນໃນສະຫະຣັດ

Lesson 16

## INDOCHINESE REFUGEES

## IN THE UNITED STATES

# ອົພຍົບ ອິນດູຈີນໃນສະຫະຣັດ

ນັບ ຕັ້ງ ແຕ່ ເດືອນ ເມສາ ປີ ໑໙໗໕ ເປັນ ຕົ້ນ ມາ, ຊາວ ອົພຍົບ ຈາກ ປະເທດ ຫວຽດນາມ, ກັມພູ ຊາ ແລະ ລາວ ໄດ້ ພາ ກັນ ຫລັ່ງໄຫລ ເຂົ້າ ມາຂໍ ລີ້ ພັຍ ການເມືອງ ຢູ່ ສະຫະຣັດ ອະເມຣິກາ.

ຕອນ ທຳ ອິດ, ມີ ຊາວ ອົພຍົບ ຫວຽດນາມ ຈຳ ນວນ ຮ້ອຍ ຊາວ ຫ້າ ພັນ (໑໒໕.໐໐໐) ຄົນ ມາຮອດ ກ່ອນ ; ຕໍ່ ມາ ແມ່ນ ຊາວ ອົພຍົບ ຂເມນ ປະມານ ສີ່

ພັນ ຫົກ ຮ້ອຍ (໔.໖໐໐) ຄົນ , ແລະໃນທີ່ສຸດ ຊາວ ອົພະຍົບ ມົ້ງ ລາວ ຈຳນວນ ແປດ ຮ້ອຍ (໘໐໐) ຄົນ ກໍໄດ້ ຮັບ ອະນຸຍາດ ເຂົ້າ ສູ່ ດິນ ແດນ ຂອງ ສະຫະຣັດ.

ຕາມ ສະຖິຕິ ຂອງ ຣັຖບານ ກາງ, ໃນທ້າຍປີ ໑໙໗໕, ມີ ຊາວ ອົພະຍົບ ຈາກ ປະເທດ ຫວຽດນາມ, ລາວ ແລະ ກັມພູຊາ ເກືອບ ແປດ (໘) ແສນຄົນ ທີ່ໄດ້ ມາ ດຳ ຣົງ ຊີ ວິດ ໃໝ່ ໃນ ສະຫະຣັດ.

ບັນດາ ຣັດ ຕ່າງໆ ເຊັ່ນ ຣັດ ຄາລີຟໍເນັຽ,




ບັນດາຣັດຕ່າງໆ ທີ່ມີຊາວອົພຍົບອິນດູຈີນ
ເກີນ ສິບ ພັນ ຄົນ ໃນ ປີ ໑໙໗໕

ເທັກຊັສ , ວໍຊິງຕັນ , ອິລີນ່ອຍ , ນິວຢອກ , ແພນຊິວເວ້ເຍັງ ,ມິນເນໂຊຕາ , ມັດ່ຊາຊູແຊສ. ແລະ ຣັດ ອໍຣິກັນ ເປັນ ບັນດາ ຣັດ ທີ່ ມີ ຊາວອົພຍົບ ອິນດູຈີນ ຫລາຍ ກວ່າ ໝູ່ .

ຣັຖບານ ແລະ ປະຊາຊົນ ອະເມຣິກັນ ໃນ ທຸກລະດັບໄດ້ ສະແດງຈິດໃຈ ອຸ້ມຊູ ແລະໄດ້ ທຸ້ມເທ ພາຫະນະ ຕ່າງ ໆ ນັບ ເປັນ ຫລາຍພັນ ລ້ານໂດລາ ເພື່ອ ບັນເທົາ ທຸກ ຊາວອົພຍົບ



ຊາວຂະມຸ
ເປັນ ເຜົ່າ ໃຫຍ່
ອີກ ເຜົ່າ ນຶ່ງ
ທີ່ ໄດ້ ໜີ
ອົພຍົບ ເຂົ້າ
ມາ ສະຫະຣັດ

ອິນ ດູຈີນ ຕລອດ ມາ .

ພວກ ເຮົາ ຂໍ ບໍ່ ລືມ ບຸນ ຄຸນ ອັນ ປະເສີດ ເລີດ ລ້ຳ ອັນ ນີ້ ຈັກ ເທື່ອ ! ພວກ ເຮົາ ພ້ອມ ແລ້ວ ທີ່ ຈະ ຕັ້ງ ໃຈ ຕໍ່ ການ ທຳ ມາ ຫາ ກິນ ເພື່ອ ໃຫ້ ກຸ້ມ ຕົນ ເອງ , ເພື່ອ ຊິດ ຊ່ອຍ ລູກ ເຕົ້າ ໃຫ້ ສຳ ເຣັດ ການ ສຶກ ສາ ວິຊາ ຄວາມ ຮູ້ ສູງ ແລະ ເພື່ອ ໃຫ້ ດິນ ແດນ ອິສຣະພາບ ແຫ່ງ ນີ້ ມີ ຄວາມ ວັທນາ ຖາວອນ ຕລອດໄປ .

# ຄຳຖາມ

໑. ດ້ວຍ ສາຍເຫດ ອັນໃດ ຊາວ ອິນດູຈີນ ຈຶ່ງ ພາກັນ ຫລັ່ງໄຫລ ມາສູ່ ສະຫະຣັດ ອະເມຣິກາ ໃນ ປີ ໑໙໗໕ ?

໒. ຄອບຄົວ ຂອງ ເຈົ້າ ໃຊ້ ຊີວິດ ຢູ່ ສູນ ອົພຍົບ ດົນ ປານໃດ ແລະ ຍ້ອນ ຫຍັງ ຈຶ່ງໄດ້ ມາ ອະເມຣິກາ ຊ້າ ?

໓. ຄອບຄົວ ຂອງ ເຈົ້າ ຖືກ ຮັບໄປ ຣັດໃດ ກ່ອນ ? ພວກ ເຈົ້າ ໄດ້ ຍ້າຍ ເຂົ້າ ມາ ຣັດ ຄາລີຟໍເນັຽ ໃນ ປີໃດ ? ເປັນຫຍັງຈຶ່ງມາ ?

໔. ຣັຖບານ ແລະ ປະຊາຊົນ ອະເມຣິກັນໄດ້ ຊິດ ຊ່ອຍ ພວກ ເຮົາ ຢ່າງ ຫລາຍ ; ເຮົາ ຄວນ ຕອບ ແທນ ບຸນ ຄຸນ ນີ້ ດ້ວຍວິທີໃດ ?

ບົດຮຽນ ທີ ໑໗

# ສັນຊາດໃໝ່ ຂອງຂ້ອຍ

Lesson 17

## MY NEW CITIZENSHIP

# ສັນຊາດ ໃໝ່ ຂອງ ຂ້ອຍ

ຄອບຄົວ ຂອງ ຂ້ອຍ ໄດ້ ຍື່ນ ຄຳ ຮ້ອງ ຂໍ ປ່ຽນ ສັນຊາດ ເປັນ ອະເມຣິກັນ ມາ ໄດ້ ສອງ ປີ ແລ້ວ. ພວກ ຂ້ອຍ ໄດ້ ພາ ກັນ ຄອງ ຄອຍ ຄຳ ຕອບ ຈາກ ຣັຖບານ ອະເມຣິກັນ ຢູ່ ຕລອດ ມາ. ພວກ ຂ້ອຍ ຢາກ ເປັນ ຄົນ ອະເມຣິກັນ ຫລາຍ ທີ່ ສຸດ ແລະ ຢາກ ຮ່ວມ ຊາດ ນຳ ປະຊາຊົນ ອະເມຣິກັນ ທີ່ ຍິ່ງ ໃຫຍ່ ນີ້ ດ້ວຍ ຄວາມ ພໍໃຈ ແລະ ຫວັງ ດີ ຈິງ ແທ້.

ບັດນີ້, ຄວາມ ຝັນ ອັນ ຍິ່ງໃຫຍ່ ຂອງ ພວກ
ຂ້ອຍໄດ້ ກັບກາຍ ມາ ເປັນຈິງ ແລ້ວ! ນອກຈາກ
ໃບ ປະກາດ ສະນິຍະບັດ ຍັ້ງ ຢືນ ສັນຊາດ ອະເມ
ຣິກັນ ຂອງ ພວກ ຂ້ອຍ ແລ້ວ, ຍາພໍ່ ຂອງ ຂ້ອຍ
ໄດ້ ຮັບ ເອກສານ ສຳຄັນ ຕ່າງ ໆ ຈາກ ຣັຖບານ
ກາງ ຕື່ມ ອີກ.

ພ້ອມ ດຽວກັນ ນັ້ນ, ພວກຂ້ອຍ ຍັງ ໄດ້ຮັບ
ຈົດໝາຍ ສ່ວນ ຕົວ ຈາກ ທ່ານ ປະທານາທິບໍດີ

ຣິກັນ ເອງ. ຈົດໝາຍດັ່ງກ່າວ ມີໃຈຄວາມສຳ
ຄັນຍິ່ງ. ທ່ານ ປະທານາທິບໍດີ ແຫ່ງ ສະຫະຣັດ
ອະເມຣິກາ ໄດ້ກ່າວວ່າ ຣັຖບານກາງ ແລະ ທ່ານ
ເອງ ຂໍ ສະແດງ ຄວາມ ຍິນດີ ຕ້ອນ ຮັບ ພວກ
ຂ້ອຍ ເຂົ້າ ໃນ ຖັນ ແຖວ ຂອງ ປະຊາຊົນ ອະເມຣິ
ກັນ ດ້ວຍ ຄວາມຈິງໃຈ ແລະ ຫວັງວ່າ ພວກຂ້ອຍ
ເຊິ່ງໄດ້ ກາຍ ມາ ເປັນ ພົລເມືອງ ສັນຊາດອະເມ
ຣິກັນໃໝ່ ໆ ນີ້ ຄົງຈະ ບາກ ບັ່ນ ພະຍາຍາມ

ຂ້ອຍ ຂໍ
ປະຕິຍານ
ຕົວວ່າ
ຂ້ອຍຈະຮຽນ
ໃຫ້ເປັນຄົນ
ດີຂອງຊາດ



ອະເມຣິກັນທີ່ຍິ່ງໃຫຍ່

ປະກອບ ສ່ວນ ດ້ວຍ ທຸກວິທີ ທາງ ເພື່ອໃຫ້ປະເທດ
ຊາດ ອະເມຣິກັນ ຂອງ ພວກເຮົາ ທັງໝົດນີ້ ສາ
ມາດ ຄົງ ຕົວ ແລະ ດຳເນີນງານ ເປັນ ຊາດທີ່ ຍິ່ງ
ໃຫຍ່ ເລີດ ຕລອດໄປ.

ຄຳ ສັນຣະເສີນ ເຍີນຍໍ ທີ່ ມາຈາກ ທ່ານ ປະທາ
ນາທິບໍດີ ໄດ້ ພາໃຫ້ ພວກຂ້ອຍ ພາກພູມໃຈ
ຢ່າງ ຫາ ອັນ ປຽບ ບໍ່ໄດ້ເລີຍ. ຂໍໃຫ້ ສະຫະຣັດ
ອະເມຣິກາ ຈົງຈະເຣີນ !



# ເຈຕນາຫັງ ປຸນຍັງວະເທມິ

# ຄຳຖາມ

໑. ເຈົ້າ ຮູ້ ບໍ່ວ່າ ຄົນ ລາວ ເຮົາ ໄດ້ ຍື່ນ ຄຳ ຮ້ອງ ຂໍ ເອົາ ສັນຊາດ ອະເມຣິກັນ ຫລາຍ ກວ່າ ຊາວ ອິນດູຈີນ ອື່ນໆ ; ຍ້ອນ ຫຍັງ ?

໒. ຄົນ ລາວ ອະເມຣິກັນ ມີ ໜ້າທີ່ ຮັບຜິດຊອບ ຫຍັງ ແດ່ ຕໍ່ ສະຫະຣັດ ອະເມຣິກາ ? ແລະ ຄວນ ມີ ທ່າທີ ແນວໃດ ຕໍ່ ບັນຫາ ລາວ , ຕໍ່ ອັທນະທັມ ລາວ ແລະ ພາສາ ລາວ ?

໓. ຄວາມ ສຳຄັນ ແລະ ຈຸດດີ ຈຸດ ເດັ່ນ ຂອງ ສະຫະຣັດ ມີ ຫຍັງ ແດ່ ? ຄວາມ ບົກພ່ອງ ຂອງ ສັງຄົມ ອະເມຣິກັນ ຢູ່ໃສ?

໔. ເຈົ້າ ຄິດ ແນວໃດ ກ່ຽວກັບ ຄົນ ປ່ຽນ ສັນຊາດ ?

ບົດຮຽນ ທີ ໑໘

# ສ້າງຄວາມດີ ຢ່າໜີຄວາມຍາກ

Lesson 18

## IN PROMOTING GOODNESS



# ສ້າງຄວາມດີ

ສ້າງ ຄວາມດີ　ຢ່າ ໜີ ຄວາມຍາກ
ຫາກ ລຳບາກ　ຢ່າ ຂາດ ຄວາມ ຫວັງ
ຊີວາ ຍັງ　ໃຫ້ ສົມ ປໂຍດ
ຄວາມ ສັນໂດດ　ໃຫ້ ຢູ່ ໃນ ທັມ
ເປັນ ຜູ້ ນຳ　ຢ່າ ເຂີ່ນ ຄວາມ ເຊື່ອ
ແນວ ເປັນ ເຫຍື່ອ　ເຫັນ ແລ້ວ ຢ່າ ຊວນ
ຄວນ ບໍ່ ຄວນ　ໃຫ້ ຮູ້ ສາຍ ເຫດ



# ສ້າງຄວາມດີ (ຕໍ່)

ເຣື່ອງ ປະເທດ　　ຕ້ອງ ໃຫຍ່ ກວ່າ ຄົນ
ໃຈ ສັບ ສົນ　　ຢ່າ ຟ້າວ ອອກ ປາກ
ເຫັນ ດິນ ດາກ　　ຢ່າ ປຽບ ໃສ່ ຫິນ
ໃຜ ບິນ ເປັນ　　ຢ່າ ໄດ້ ໃຊ້ ຍ່າງ
ສິ່ງ ບ່ ຊ່າງ　　ຢາກ ເຮັດ ຕ້ອງ ຮຽນ
ມີ ໃຈ ພຽນ　　ຈຶ່ງ ຫວັງ ສຳ ເຣັດ
ຜົນ ແລະ ເຫດ　　ບ່ ຢູ່ ໄກ ກັນ　ດອກ ນາ !

# ຄຳຖາມ

໑. ເປັນຫຍັງ ບຸກຄົນ ທີ່ ຈິງໃຈ ໃນ ເຈຕນາ ຢາກ ສ້າງ ຄວາມດີນັ້ນ ຈຶ່ງ ມັກ ຖືກ ມີ ຄົນ ອື່ນ ສົ່ງ ສັຍ ແລະ ພົບ ພໍ້ ຂໍ້ ຫຍຸ້ງ ຍາກ ເລື້ຍໆ ?

໒. ເປັນຫຍັງ ຈຶ່ງວ່າ " ຄວາມສັນໂດດ ໃຫ້ຢູ່ໃນທັມ " ?

໓. " ເຣື່ອງປະເທດ ຕ້ອງໃຫຍ່ກວ່າຄົນ " ນັ້ນ ໝາຍວ່າຫຍັງ ?

໔. ຄົນ ທີ່ ປຽບ ທຽບ ຄວາມ ແຂງ ຂອງ ດິນ ດາກ ແຫ້ງ ໃສ່ ກັບ ຜາ ຫີນ ແລ້ວ ສະລຸບ ຜົນ ວ່າ " ແຂງ ສໍ່າ ໆ ກັນ " ນັ້ນ ເປັນ ນັກ ສັງ ເກດ ການ ຫລື ນັກ ຄົ້ນ ຄ້ວາ ປະເພດໃດ ?

໕. " ໃຜ ບິນ ເປັນ ຢ່າໄດ້ ໃຊ້ ຍ່າງ " ໝາຍ ຄວາມ ວ່າ ແນວໃດ ?

ບົດຮຽນ ທີ ໑໙

# ຝັນວ່າ . . .

Lesson 19

# I THOUGHT IN MY DREAM

# ຝັນວ່າ ...

ຝັນວ່າ ໃຕ້ລຸ່ມຟ້າ ມວນມະນຸດຖືສິນ
ຝັນວ່າ ຄົນກິນທານ ບໍ່ຕັນຫາ ຕົວະຕົ້ມ
ຝັນວ່າ ສົມບຸນແລ້ວ ຄົນເຮົາບໍ່ຢ້ານລື່ນ
ຝັນວ່າ ລາວໝື່ນໜ້າ ປະສົງດ້າມດັ່ງຈາ
ຝັນວ່າ ລູກເກ່ງກ້າ ສແວງຮ່ຳຮຽນສູງ
ຝັນວ່າ ລຸງຕາຈູງ ຫລີກພະນັນມານຮ້າຍ
ຝັນວ່າ ເປັນນາຍແທ້ ຄົນເຮົາບໍ່ຄິດຕ່ຳ
ຝັນວ່າ ອຳນາດເສົ້າ ເມືອໜ້າ ຫາກາ ໝິ່ນໝອງ .



## ຄຳຖາມ

໑. "ສີນ" ແປວ່າ ຫຍັງ ? ສ່ວນ ປະກອບ ຂອງ ສີນ ຫ້າ ມີ ຫຍັງແດ່ ? ສີນ ແປດ ເດ ມີ ຫຍັງແດ່ ?

໒. ໃຜ ຄວນ ຖື ສີນ ແປດ ? ຍ້ອນ ຫຍັງ ?

໓. ເປັນ ຫຍັງ ການ ພະນັນ ຈຶ່ງ ຖືກ ເອີ້ນ ວ່າ ເປັນ ນານສັງຄົມ ?

໔. ການ ຊິດ ຊ່ອຍ ແລະ ການ ທານ ມີ ຄວາມ ໝາຍ ແຕກ ຕ່າງ ກັນ ຢູ່ ບ່ອນ ໃດ ?

໕. " ອຳນາດ ເສົ້າ " ແມ່ນ ອຳນາດ ປະເພດໃດ ?